ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-12 ກໍລະກົດ 2022
ປີທີ 11
ສະບັບທີ 858

## ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ປິດລົງດ້ວຍຜົນສຳເລັດອັນສະຫງ່າງາມ






(ສພຊ) ພາຍຫລັງດຳເນີນມາເປັນເວລາ 20 ວັນ (ບໍ່ນັບວັນພັກລັດຖະການ) ນັບແຕ່ວັນທີ 13 ມິຖຸນາ-8 ກໍລະກົດ 2020 ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໄດ້ປິດລົງດ້ວຍຜົນສຳເລັດອັນສະຫງ່າງາມ ໃນຕອນບ່າຍຂອງວັນທີ 8 ກໍລະກົດຜ່ານມາ ໂດຍການເປັນປະທານກອງປະຊຸມຂອງພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ; ເຂົ້າຮ່ວມມີພະນະທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ; ພະນະທ່ານ ພັນຄຳ ວິພາວັນ ນາຍົກລັດຖະມົນຕີ; ມີການນຳພັກ-ລັດ, ສະມາຊິກ

ອ່ານຕໍ່ໜ້າ 2

## ຜົນສຳເລັດຂອງກອງປະຊຸມຄັ້ງນີ້ ແມ່ນໝາກຜົນແຫ່ງສະຕິປັນຍາ, ການຍົກສູງຄວາມຮັບຜິດຊອບຂອງ ສສຊ

**ຫົວຂໍ້ນີ້ແມ່ນຄະນະບັນນາທິການຄັດຈາກບົດສຸນທອນພົດ**
**ຂອງພະນະທ່ານ ປອ. ໄຊສົມພອນ ພົມວິຫານ**
**ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ**
**ກ່າວປິດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX**

**ຮຽນ:** - ພະນະທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ປະຊາຊົນປະຕິວັດລາວ, ປະທານປະເທດ ແຫ່ງ ສປປ ລາວ ທີ່ເຄົາລົບ ແລະ ນັບຖືຢ່າງສູງ!

- ບັນດາທ່ານ ຜູ້ນຳຂັ້ນສູງ, ອາດີດຜູ້ນຳຂັ້ນສູງ ຂອງພັກ-ລັດ ທີ່ນັບຖື.
- ບັນດາທ່ານສະມາຊິກສະພາແຫ່ງຊາດ, ແຂກທີ່ມີກຽດ ທີ່ນັບຖື ແລະ ຮັກແພງທັງຫລາຍ.

ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນມາແຕ່ວັນທີ 13 ມິຖຸນາ ຫາ ວັນທີ 08 ກໍລະກົດ 2022 ເຊິ່ງລວມເປັນເວລາ 20 ວັນ ໃນທ່າມກາງບັນຍາກາດ ທີ່ປະເທດເຮົາພວມປະເຊີນກັບ

ອ່ານຕໍ່ໜ້າ 3

## ຖະແຫລງຜົນການພິຈາລະນາ ແລະ ຮັບຮອງເອົາກົດໝາຍ

ໃນວັນທີ 7 ກໍລະກົດ 2022, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ ໄດ້ຖະແຫລງກ່ຽວກັບຜົນການພິຈາລະນາ ແລະ ຮັບຮອງເອົາກົດໝາຍ ຂອງກອງປະຊຸມສະໄໝສາມັນເທື່ອທີ 3 ສະພາແຫ່ງຊາດ ຊຸດທີ IX.

ກອງປະຊຸມໄດ້ສຸມໃສ່ພິຈາລະນາ ແລະ ລົງຄະແນນສຽງຮັບຮອງເອົາກົດໝາຍ ຈຳນວນ 9 ສະບັບ ດ້ວຍການເຫັນດີເປັນສຽງສ່ວນຫລາຍຕໍ່ກົດໝາຍແຕ່ລະສະບັບ ດ້ວຍຄວາມຮັບຜິດຊອບສູງ. ໃນນີ້ ມີກົດໝາຍສ້າງໃໝ່ 3 ສະບັບ ແລະ ກົດໝາຍປັບປຸງ 6 ສະບັບ, ເຊິ່ງມີລາຍຊື່ກົດໝາຍລາຍລະອຽດດັ່ງນີ້:



- **ກົດໝາຍສ້າງໃໝ່ 3 ສະບັບ ມີ:**

1. ກົດໝາຍວ່າດ້ວຍວິຈິດສິນ ເຊິ່ງແມ່ນກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ສະເໜີ;
2. ກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ເຊິ່ງແມ່ນກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ສະເໜີ;
3. ກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ ເຊິ່ງແມ່ນກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ສະເໜີ.

- **ກົດໝາຍປັບປຸງ 6 ສະບັບ ມີ:**

1. ກົດໝາຍວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ເຊິ່ງແມ່ນກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ສະເໜີ;
2. ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ເຊິ່ງແມ່ນທະນາຄານແຫ່ງ ສປປລາວ ເປັນຜູ້

ອ່ານຕໍ່ໜ້າ 7

## ຖະແຫລງຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX



ໃນຕອນບ່າຍຂອງວັນທີ 8 ກໍລະກົດ 2022, ທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ ໄດ້ຖະແຫລງຜົນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX, ກອງປະຊຸມໄດ້ດຳເນີນເປັນເວລາ 20 ວັນ ພາຍໃຕ້ການນຳພາຂອງພະນະທ່ານ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ ປະທານສະພາແຫ່ງຊາດ ຄະນະປະຈຳສະພາແຫ່ງຊາດ ແລະ ການສຸມເຫື່ອແຮງສະຕິປັນຍາຂອງບັນດາທ່ານສະມາຊິກສະພາແຫ່ງຊາດ, ການປະກອບສ່ວນຂອງລັດຖະບານ, ອົງການ, ກະຊວງ, ຂະແໜງການຕ່າງໆ ແລະ ພາກສ່ວນທີ່ກ່ຽວຂ້ອງຕາມພາລະບົດບາດຂອງຕົນ ເຂົ້າໃນການກະກຽມ ແລະ ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ເຮັດໃຫ້

ອ່ານຕໍ່ໜ້າ 2

## ປະທານ ກຕທ ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງເອກອັກຄະລັດຖະທູດອິດສະຕາລີ



ໜ້າ 2


ໜ້າ 4


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5


ໜ້າ 4

**ຊົມເຊີຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ຢ່າງສຸດໃຈ!**

## ປະທານ...

(ສພຊ) ໃນວັນທີ 22 ມິຖຸນາ 2022 ທີ່ສະພາແຫ່ງຊາດທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ໂພລ ເຄລີ (Paul Kelly) ເອກອັກຄະລັດຖະທູດ ແຫ່ງ ອິດສະຕາລີ ປະຈຳ ສປປລາວ ພ້ອມດ້ວຍຄະນະ.

ໂອກາດດັ່ງກ່າວ, ທ່ານ ສັນຍາ ປຣະເສີດ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນຕໍ່ທ່ານ ໂພລ ເຄລີ ເອກອັກຄະລັດຖະທູດ ແຫ່ງ ອິດສະຕາລີ ປະຈຳ ສປປລາວ ທີ່ໄດ້ສະລະເວລາອັນມີຄ່າເຂົ້າຢ້ຽມຂໍ່ານັບໃນຄັ້ງນີ້ ເປັນຄັ້ງທຳອິດທີ່ພົບກັນ ຢູ່ສະພາແຫ່ງຊາດ ເຊິ່ງຈະເປັນໂອກາດດີທີ່ຈະໄດ້ປຶກສາຫາລື ກ່ຽວກັບການຊຸກຍູ້ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສປປລາວ ແລະ ອິດສະຕາລີ ກໍຄືລະຫວ່າງສອງອົງການນິຕິບັນຍັດ ໃຫ້ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວຍິ່ງໆຂຶ້ນ ຕີລາຄາສູງຕໍ່ການພົວພັນຮ່ວມມື ລະຫວ່າງສອງປະເທດ ລາວ ແລະ ອິດສະຕາລີ ຕະຫລອດໄລຍະ 69 ປີຜ່ານມາ ເຊິ່ງໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວເປັນກ້າວໆ, ເຫັນໄດ້ຈາກການແລກປ່ຽນການຢ້ຽມຢາມຢ່າງເປັນປົກກະຕິ ລະຫວ່າງການນຳຂັ້ນສູງ ແລະ ລະດັບຕ່າງໆ ຂອງສອງປະເທດ, ການຮ່ວມມືທາງດ້ານການເມືອງ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເສດຖະກິດ-ການຄ້າ, ການລົງທຶນ, ການສຶກສາ ແລະ ອື່ນໆ ໄດ້ມີການຂະຫຍາຍຕົວ. ໃນໄລຍະຜ່ານມາ ອິດສະຕາລີ ໄດ້ໃຫ້ການຊ່ວຍເຫລືອລາວທາງດ້ານພັດທະນາຊັບພະຍາກອນມະນຸດຕະຫລອດມາ ເຊິ່ງມີນັກສຶກສາລາວ ທີ່ໄດ້ຮັບການສະໜັບສະໜູນທາງດ້ານທຶນການສຶກສາເປັນຈຳນວນຫລາຍ ແລະ ບຸກຄະລາກອນເຫລົ່ານັ້ນລ້ວນແຕ່ເປັນກຳລັງແຮງໃຫ້ແກ່ບັນດາຂະແໜງການທີ່ສຳຄັນຂອງພາກລັດ. ພິເສດ, ໃນໄລຍະຜ່ານມາ ມີພະນັກງານຂອງສະພາແຫ່ງຊາດ ຈຳນວນ 9 ທ່ານ ທີ່ໄດ້ສຳເລັດການສຶກສາຢູ່ປະເທດອິດສະຕາລີ. ພ້ອມນີ້, ອິດສະຕາລີ ຍັງໄດ້ໃຫ້ການຊ່ວຍເຫລືອທາງດ້ານການຮ່ວມມືເພື່ອການພັດທະນາ (ODA) ໃຫ້ແກ່ລາວ ເປັນມູນຄ່າຫລາຍລ້ານໂດລາອິດສະຕາລີ.

ໃນປີ 2022 ນີ້ ແມ່ນຄົບຮອບ 70 ປີ ແຫ່ງວັນສ້າງຕັ້ງສາຍພົວພັນການທູດ ລະຫວ່າງ ສອງປະເທດ ເຊິ່ງຈະໄດ້ກະກຽມກິດຈະກຳເພື່ອສະເຫລີມສະຫລອງວັນສຳຄັນດັ່ງກ່າວ ພ້ອມທັງແຈ້ງສະພາບການປະຕິບັດໜ້າທີ່ຂອງກຳມາທິການການຕ່າງປະເທດໂດຍສັງເຂບ ແລະ ສະເໜີແລກປ່ຽນທິດທາງແຜນການການພົວພັນຮ່ວມມື ລະຫວ່າງສອງອົງການນິຕິບັນຍັດໃນຕໍ່ໜ້າ ສະເໜີໃຫ້ມີການແລກປ່ຽນຄະນະຜູ້ແທນນຳກັນໃນລະດັບຕ່າງໆ ເປັນຕົ້ນຄະນະປະທານສະພາແຫ່ງຊາດ, ຄະນະປະທານກຳມາທິການ, ຄະນະມິດຕະພາບລັດຖະສະພາລາວ-ອິດສະຕາລີ ແລະ ຄະນະອື່ນໆ ຢ່າງເປັນປົກກະຕິ ແລະຕໍ່ເນື່ອງ; ສະເໜີໃຫ້ການຮ່ວມມືທາງວິຊາການໂດຍຮູບການຈັດສຳມະນາ, ເຝິກອົບຮົມ, ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນນຳກັນ ເພື່ອຍົກສູງຂີດຄວາມສາມາດໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຂອງ ສປປລາວ, ພ້ອມທັງແຈ້ງໃຫ້ທ່ານທູດຊາບວ່າ: ສະພາແຫ່ງຊາດລາວ ຈະເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ ຂອງອົງການລັດຖະສະພາລະຫວ່າງຊາດອາຊຽນ (AIPA) ໃນປີ 2024, ຈຶ່ງຂໍສະເໜີທາງຝ່າຍອິດສະຕາລີ ຊ່ວຍຍົກສູງຄວາມສາມາດໃນການກະກຽມເນື້ອໃນໃຫ້ແກ່ສະພາແຫ່ງຊາດ ແລະ ວິຊາການຊ່ວຍວຽກຈຳນວນໜຶ່ງ ເປັນຕົ້ນການເປັນປະທານກອງປະຊຸມ, ການເຮັດບົດລາຍງານ, ການຮ່າງຍັດຕິກອງປະຊຸມ, ຖະແຫລງການ ແລະ ເອກະສານກອງປະຊຸມ ອື່ນໆ; ປັດຈຸບັນສະພາແຫ່ງຊາດກຳລັງຮ່າງບົດສະເໜີໂຄງການ ເພື່ອຂໍທຶນສະໜັບສະໜູນຈາກສະຖານເອກອັກຄະລັດຖະທູດອິດສະຕາລີ ປະຈຳ ສປປລາວ ເພື່ອຍົກສູງຂີດຄວາມສາມາດໃຫ້ແກ່ພະນັກງານລັດຖະກອນທີ່ເປັນເສນາທິການຮັບໃຊ້ໃຫ້ແກ່ວຽກງານການຕ່າງປະເທດ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ສະເໜີໃຫ້ມີການສືບຕໍ່ແລກປ່ຽນຄຳເຫັນ ແລະສະໜັບສະໜູນ ເຊິ່ງກັນແລະກັນ ກ່ຽວກັບບັນຫາຕ່າງໆໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ທ່ານ ໂພລ ເຄລີ ກໍໄດ້ກ່າວສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນຕໍ່ທ່ານ ສັນຍາ ປຣະເສີດ ພ້ອມທັງແຈ້ງຈຸດປະສົງຂອງການເຂົ້າຢ້ຽມຂໍ່ານັບໃນຄັ້ງນີ້ ແລະ ເຫັນດີທີ່ຈະນຳເອົາຂໍ້ສະເໜີຕ່າງໆນຳໄປພິຈາລະນາ ແລະ ປະສານກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຕອບສະໜອງຕາມຄວາມເໝາະສົມ.

## ຖະແຫລງຜົນສໍາເລັດ...

ການພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງຊາດ ຕາມສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

ຂ້າພະເຈົ້າຕາງໜ້າຄະນະປະຈຳສະພາແຫ່ງຊາດ, ທັງເປັນຫົວໜ້າກອງເລຂານຸການຂອງກອງປະຊຸມ ມີຄວາມຍິນດີ ແລະ ຖືເປັນກຽດແຈ້ງມາຍັງບັນດາທ່ານ ພະນັກງານ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຮັບຊາບກ່ຽວກັບຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ດັ່ງນີ້:

I. ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ເລີ່ມໄຂຂຶ້ນໃນຕອນເຊົ້າຂອງວັນຈັນ, ວັນທີ 13 ມິຖຸນາ 2022 ແລະ ໄດ້ດຳເນີນມາເຖິງຕອນບ່າຍຂອງວັນສຸກ ວັນທີ 8 ກໍລະກົດ 2022 ເຊິ່ງໄດ້ໃຊ້ເວລາດຳເນີນກອງປະຊຸມທັງໝົດ 20 ວັນ. ໃນກອງປະຊຸມຄັ້ງນີ້ນອກ ຈາກການເຂົ້າຮ່ວມຂອງສະມາຊິກສະພາແຫ່ງຊາດແລ້ວຍັງມີການນຳຂັ້ນສູງຂອງພັກ-ລັດ, ຄະນະລັດຖະບານ, ອົງການຈັດຕັ້ງພັກ-ລັດ ແລະ ແຂກຖືກເຊີນເຂົ້າຮ່ວມຢ່າງພ້ອມພຽງ.

II. ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ພິຈາລະນາຮັບຮອງເອົາ

ບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍໄດ້ອອກເປັນມະຕິກອງປະຊຸມ ດັ່ງນີ້:

1) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

2) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

3) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ;

4) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບທິດທາງການປະຕິຮູບລັດວິສາຫະກິດ ລວມທັງການປັບປຸງໂຄງສ້າງຂອງທະນາຄານທຸລະກິດລັດ;

5) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19;

6) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດສຶກສາທິການ ແລະ ກິລາ ເປັນຕົ້ນ ການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຂັ້ນທຸກສາຍ ໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍະກຳ;

7) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການເຄື່ອນໄຫວວຽກງານໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາ ກອງປະຊຸມສະໄໝສາມັນ ເທື່ອທີ 3 ແລະແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX;

8) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບຜົນການຕິດຕາມກວດກາວາລະແຫ່ງຊາດໃນໄລຍະຜ່ານມາ ແລະ ແຜນການຕິດຕາມກວດກາຂອງສະພາແຫ່ງຊາດ ກ່ຽວກັບການປະຕິບັດວາລະແຫ່ງຊາດໃນຕໍ່ໜ້າ;

9) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາເລືອກຕັ້ງປະທານອົງການກວດສອບແຫ່ງລັດ;

10) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາຍົກຍ້າຍ ແລະ ແຕ່ງຕັ້ງຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ;

11) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາການແຕ່ງຕັ້ງຮອງນາຍົກລັດຖະມົນຕີ;

12) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍ ຈຳນວນ 09 ສະບັບ (ຈຳນວນ 09 ມະຕິ).

ກົດໝາຍສ້າງໃໝ່ 3 ສະບັບຄື:

(1) ຮ່າງກົດໝາຍວ່າດ້ວຍວິຈິດສິນ;

(2) ຮ່າງກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ;

(3) ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງອາວຸດແລະວັດຖຸລະເບີດ.

ກົດໝາຍປັບປຸງ 6 ສະບັບຄື:

(1) ກົດໝາຍວ່າດ້ວຍຊັບສິນຂອງລັດ;

(2) ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ;

(3) ກົດໝາຍວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ;

(4) ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສານປະຊາຊົນ;

(5) ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ;

(6) ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ.

ໃນການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ນີ້ ສະພາແຫ່ງຊາດໄດ້ສະເໜີໃຫ້ 20 ພາກສ່ວນ ຂຶ້ນຊີ້ແຈງຕໍ່ຄຳຊັກຖາມກ່ຽວກັບບັນຫາທີ່ພົ້ນເດັ່ນຂອງສັງຄົມ ເຊິ່ງສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດໄດ້ຍົກຂຶ້ນຢູ່ໃນກອງປະຊຸມປະກອບມີທ່ານນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ທະນາຄານແຫ່ງ ສປປລາວ, ກະຊວງອຸດສາຫະກຳ-ການຄ້າ, ກະຊວງເຕັກໂນໂລຊີແລະການສື່ສານ, ກະຊວງພະລັງງານແລະບໍ່ແຮ່, ກະຊວງກະສິກຳ-ປ່າໄມ້, ກະຊວງພາຍໃນ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງແຮງງານສະຫວັດດີການ ແລະ ສັງຄົມ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງສຶກສາທິການ ແລະ ກິລາ, ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງສາທາລະນະສຸກ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງຍຸຕິທຳ, ສານປະຊາຊົນສູງສຸດ ແລະ ໄອຍະການປະຊາຊົນສູງສຸດ.

III. ຄຽງຄູ່ກັບການພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນດັ່ງກ່າວມາຂ້າງເທິງນັ້ນ ໃນໄລຍະດຳເນີນກອງສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ມີປະຊາຊົນບັນດາເຜົ່າສົ່ງຄຳຄິດຄຳເຫັນຜ່ານໂທລະສັບສາຍດ່ວນ (156) ຫລາຍກວ່າ 588 ສາຍ ເຊິ່ງພົວພັນເຖິງການຄຸ້ມຄອງບໍລິຫານລັດ, ການພັດທະນາເສດຖະກິດ-ສັງຄົມ, ການພັດທະນາທີ່ມີຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ຕໍ່ກັບຄຳຄິດເຫັນຂອງປະຊາຊົນທີ່ສົ່ງມາທາງໂທລະສັບສາຍດ່ວນດັ່ງກ່າວ ກອງເລຂາກອງປະຊຸມຈະໄດ້ສັງລວມ ແລະ ມອບໃຫ້ກຳມາທິການທີ່ກ່ຽວຂ້ອງ ເພື່ອປະສານສົມທົບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າແກ້ໄຂໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການ.

ອີກເທື່ອໜຶ່ງຕາງໜ້າຄະນະປະຈຳສະພາແຫ່ງຊາດ, ຂ້າພະເຈົ້າຂໍຂອບໃຈມາຍັງບັນດາທ່ານ ພະນັກງານ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນລາວບັນດາເຜົ່າທຸກຊັ້ນຄົນໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ທີ່ໄດ້ຕິດຕາມການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້.

ຂໍສະແດງຄວາມຂອບໃຈ ແລະ ຊົມເຊີຍຢ່າງຈິງໃຈມາຍັງພາກສ່ວນສື່ມວນຊົນທຸກສຳນັກຂ່າວລວມທັງໂທລະພາບແຫ່ງຊາດ, ວິທະຍຸກະຈາຍສຽງແຫ່ງຊາດ ແລະ ສື່ສິ່ງພິມປະເພດຕ່າງໆ ທີ່ໄດ້ຕິດຕາມຢ່າງໃກ້ຊິດເພື່ອເກັບກຳຂ່າວ ແລະ ເຜີຍແຜ່ຢ່າງທັນການກ່ຽວກັບການດຳເນີນກອງປະຊຸມໃນຄັ້ງນີ້ ໃຫ້ແກ່ສັງຄົມໄດ້ຮັບຊາບຢ່າງທົ່ວເຖິງ.

## ກອງປະຊຸມ...

ສະພາແຫ່ງຊາດ (ສສຊ), ອະດີດການນຳພັກ-ລັດ, ພະນັກງານອາວຸໂສບຳນານ, ອະດີດ ສສຊ, ຕາງໜ້າຈາກອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ພ້ອມດ້ວຍຜູ້ຕາງໜ້າຈາກພາກສ່ວນຕ່າງໆ ແລະ ແຂກຖືກເຊີນ.

ວາລະດຳເນີນກອງປະຊຸມຕະຫລອດ 20 ວັນ, ຄະນະປະທານໄດ້ຜັດປ່ຽນກັນເປັນປະທານກອງປະຊຸມ, ຮັບຟັງການລາຍງານ, ຄຳຊີ້ແຈງຈາກພາກສ່ວນຕ່າງໆ; ພ້ອມດຽວກັນນີ້, ບັນດາ ສສຊ ປະຈຳເຂດເລືອກຕັ້ງທົ່ວປະເທດ ໄດ້ສຸມໃສ່ຄົ້ນຄວ້າພິຈາລະນາ ແລະ ເຫັນດີຮັບຮອງບາງບັນຫາສຳຄັນຕ່າງໆຂອງຊາດ ເປັນຕົ້ນແມ່ນໄດ້ຮັບຮອງເອົາກົດໝາຍ ຈຳນວນ 9 ສະບັບ; ໃນນັ້ນ, ກົດໝາຍສ້າງໃໝ່ 3 ສະບັບ ຄື: ກົດໝາຍວ່າດ້ວຍວິຈິດສິນ; ກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ; ກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ແລະ ກົດໝາຍປັບປຸງ 6 ສະບັບ ຄື: ກົດໝາຍວ່າດ້ວຍຊັບສິນຂອງລັດ; ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ; ກົດໝາຍວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ; ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ; ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ.

ພ້ອມນັ້ນ, ກອງປະຊຸມຍັງໄດ້ພິຈາລະນາ ແລະ ຮັບຮອງເອົາຮ່າງມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 8 ສະບັບຄື: ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ; ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບທິດທາງການປະຕິຮູບລັດວິສາຫະກິດ ລວມທັງການປັບປຸງໂຄງສ້າງຂອງທະນາຄານທຸລະກິດລັດ; ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ, ການເປີດປະເທດຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19; ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຄາດໝາຍ ໃນຂົງເຂດສຶກສາທິການ ແລະ ກິລາ ເປັນຕົ້ນການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຊັ້ນ-ທຸກສາຍ ໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກຳ; ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການເຄື່ອນໄຫວວຽກງານ ໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຊ ຊຸດທີ IX; ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບຜົນການຕິດຕາມກວດກາການຈັດຕັ້ງປະຕິບັດວາລະແຫ່ງຊາດ ໃນໄລຍະຜ່ານມາ ແລະ ແຜນການຕິດຕາມກວດກາຂອງ ສພຊ ກ່ຽວກັບການປະຕິບັດວາລະແຫ່ງຊາດໃນຕໍ່ໜ້າ.

ໃນຕອນບ່າຍຂອງວັນດຽວກັນ, ກອງປະຊຸມຍັງໄດ້ລົງຄະແນນສຽງຮັບຮອງເອົາ 2 ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ຄື: ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022 ດ້ວຍຄະແນນສຽງເຫັນດີ 150 ທ່ານ, ບໍ່ເຫັນດີ 8 ທ່ານ, ບໍ່ອອກສຽງ 0 ທ່ານ ໃນຈຳນວນ ສສຊ ທີ່ເຂົ້າຮ່ວມທັງໝົດ 158 ທ່ານ ແລະ ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022 ດ້ວຍຄະແນນສຽງເຫັນດີ 151 ທ່ານ, ບໍ່ເຫັນດີ 8 ທ່ານ, ບໍ່ອອກສຽງ 0 ທ່ານ ໃນຈຳນວນ ສສຊ ທີ່ເຂົ້າຮ່ວມທັງໝົດ 159 ທ່ານ.

ຫລັງຈາກນັ້ນ, ກອງປະຊຸມໄດ້ກ້າວສູ່ພິທີປິດຢ່າງເປັນທາງການ ໂດຍແມ່ນພະນະທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດໄດ້ກ່າວສູນທອນພິດປິດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງເປັນທາງການ.

(ນາງ ປາກາລັກ ພົມມີໄຊ)

## ຜົນສຳເລັດ...

ຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ທີ່ສະສົມມາຫລາຍປີ ແລະ ໃນບັນຍາກາດທີ່ທົ່ວພັກ-ລັດ ແລະ ປວງຊົນລາວທັງຊາດສຸມໃສ່ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ຄື: ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຢ່າງເປັນຂະບວນຟົດຟື້ນ ທັງເປັນໄລຍະທີ່ລັດຖະບານໄດ້ມີມາດຕະການແກ້ໄຂບັນຫາການເໜັງຕີງຂອງລາຄານ້ຳມັນເຊື້ອໄຟ, ລາຄາສິນຄ້າ, ອັດຕາແລກປ່ຽນ ແລະ ຄວາມຫຍຸ້ງຍາກອື່ນໆ ໃຫ້ມີຄວາມຜ່ອນຄາຍລົງ, ສ່ອງແສງໃຫ້ເຫັນເຖິງຄວາມຕັດສິນໃຈ ແລະ ຄວາມຮັບຜິດຊອບສູງ ຂອງບັນດາອົງການຈັດຕັ້ງພັກ-ລັດ ໃນການຮ່ວມກັນແກ້ໄຂບັນຫາທີ່ຫຍຸ້ງຍາກຂອງປະເທດ. ມາຮອດມື້ນີ້, ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ບັນລຸຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້.

ກອງປະຊຸມສະໄໝສາມັນເທື່ອທີ 3 ໄດ້ພິຈາລະນາ ແລະ ຮັບຮອງເອົາເອກະສານດັ່ງນີ້:

1). ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022 ເຊິ່ງໄດ້ຕີລາຄາສູງຕໍ່ຄວາມພະຍາມຍາມຂອງລັດຖະບານໃນການສູ້ຊົນເຮັດໃຫ້ອັດຕາການເຕີບໂຕທາງດ້ານເສດຖະກິດສາມາດບັນລຸໄດ້ 4,3%, ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ ແລະ ສາມາດປະຄັບປະຄອງເສດຖະກິດບໍ່ໃຫ້ເຂົ້າສູ່ວິກິດການທີ່ໜັກໜ່ວງໄປກວ່ານີ້, ມີການແຕ່ງຕັ້ງຄະນະຮັບຜິດຊອບເພື່ອ ແກ້ໄຂບັນການເໜັງຕີງແຮງຂອງລາຄາສິນຄ້າ, ອັດຕາແລກປ່ຽນ, ຄວາມຫຍຸ້ງຍາກທາງດ້ານນ້ຳມັນເຊື້ອໄຟ. ພ້ອມກັນນັ້ນ, ໄດ້ມີການໂຄສະນາເຜີຍແຜ່, ປຸກລະດົມໃຫ້ປະຊາຊົນລາວບັນດາເຜົ່າ ເພີ່ມທະວີນ້ຳໃຈປະຢັດມັດທະຍັດ, ມີຄວາມສາມັກຄີເປັນຈິດໜຶ່ງໃຈດຽວ ພ້ອມກັນແກ້ໄຂບັນຫາໃນເວລາທີ່ປະເທດຊາດປະສົບກັບຄວາມຫຍຸ້ງຍາກ. ກອງປະຊຸມມອບໃຫ້ລັດຖະບານ ນຳເອົາຄວາມຄິດເຫັນຂອງກອງປະຊຸມ ໄປພິຈາລະນາເພື່ອສືບຕໍ່ປັບປຸງ, ແກ້ໄຂບັນດາບັນຫາທີ່ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ກັບສູ່ສະພາບປົກກະຕິໂດຍໄວ.

2). ກອງປະຊຸມໄດ້ຟັງການລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ. ຕະຫລອດໄລຍະເກືອບໜຶ່ງປີທີ່ຜ່ານມາ ລັດຖະບານ ໄດ້ສົມທົບກັບສະພາແຫ່ງຊາດ ຊີ້ນຳ-ບັນຊາການຈັດຕັ້ງຜັນຂະຫຍາຍມະຕິຂອງສູນກາງພັກ ເປັນອັນລະອຽດເຂົ້າໃນນິຕິກຳຂອງລັດ ແລະ ຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຢ່າງເປັນຂະບວນການກວ້າງຂວາງ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ເຊິ່ງໄດ້ຮັບຜົນສຳເລັດຫລາຍດ້ານ. ຄຽງຄູ່ກັນນັ້ນ, ກອງປະຊຸມສະເໜີໃຫ້ລັດຖະບານເພີ່ມທະວີການໂຄສະນາເຜີຍແຜ່ປຸກລະດົມໃຫ້ພໍ່ແມ່ປະຊາຊົນລາວບັນດາເຜົ່າໄດ້ຮັບຮູ້ເຂົ້າໃຈ ແລະ ເຫັນໄດ້ຄວາມຈຳເປັນຂອງການຈັດຕັ້ງປະຕິບັດວາລະແຫ່ງຊາດ, ມີການເຂົ້າຮ່ວມຢ່າງຕັ້ງໜ້າ ສູ້ຊົນຜ່ານຜ່າເຮັດໃຫ້ປະເທດຊາດ ຫລຸດພົ້ນອອກຈາກສະພາຫວະຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ກໍຄືບັນຫາຢາເສບຕິດໃຫ້ລຸດໜ້ອຍຖອຍລົງເລື້ອຍໆ; ມອບໃຫ້ລັດຖະບານ ຮີບຮ້ອນສືບຕໍ່ຊີ້ນຳບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນຈົ່ງຍົກສູງຄວາມຮັບຜິດຊອບຂອງຕົນ ຕັ້ງໜ້າເຂົ້າຮ່ວມໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ເປັນຮູບປະທຳຕົວຈິງ.

3). ກອງປະຊຸມໄດ້ພິຈາລະນາ ແລະຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ ເຊິ່ງເປັນຄັ້ງທຳອິດທີ່ໄດ້ມີການປະເມີນການ ຈັດຕັ້ງປະຕິບັດກົດໝາຍ ແລະ ນຳເຂົ້າມາພິຈາລະນາໃນກອງປະຊຸມສະພາແຫ່ງຊາດ ນັບແຕ່ໄດ້ປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍ ເປັນຕົ້ນມາ. ກອງປະຊຸມສະແດງຄວາມເປັນຫ່ວງ ຕໍ່ການປະຕິບັດ 4 ກົດໝາຍດັ່ງກ່າວ ເປັນຕົ້ນ ການຄຸ້ມຄອງ, ການໃຫ້ເຊົ່າ, ການສຳປະທານທີ່ດິນ, ການຈັບຈອງ ແລະ ຊື້-ຂາຍສິດນຳໃຊ້ທີ່ດິນ, ການຫັນທີ່ດິນເປັນກຳມະສິດອື່ນທີ່ບໍ່ສອດຄ່ອງກັບກົດໝາຍມີທ່າອ່ຽງນັບມື້ເພີ່ມຂຶ້ນ; ການຫັນແຜນແມ່ບົດພັດທະນາທີ່ດິນແຫ່ງຊາດ ເປັນແຜນຈັດສັນທີ່ດິນຂັ້ນທ້ອງຖິ່ນ, ການຂຶ້ນທະບຽນ-ອອກໃບຕາດິນ ແລະ ການວາງແຜນຍຸດທະສາດພັດທະນາທີ່ດິນຕາມຂະແໜງການຍັງຊັກຊ້າ ແລະ ເຮັດໄດ້ໜ້ອຍ; ສະເໜີເພີ່ມທະວີການຄຸ້ມຄອງບັນດາໂຄງການລົງທຶນດ້ານແຮ່ທາດໃຫ້ເຂັ້ມງວດ, ແກ້ໄຂຢ່າງທັນການຕໍ່ບັນດາໂຄງການ ແລະ ກິດຈະການລົງທຶນແຮ່ທາດ ທີ່ບໍ່ມີປະສິດທິພາບ ບໍ່ມີມືອາຊີບ ຫລື ບໍ່ປະຕິບັດຕາມກົດໝາຍ, ບໍ່ປະຕິບັດຕາມສັນຍາ, ມີຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ; ໃຫ້ເອົາໃຈໃສ່ຄຸ້ມຄອງໂຄງການລົງທຶນໃຫ້ປະຕິບັດຕາມກົດໝາຍ ແລະ ສັນຍາ, ການແບ່ງຂັ້ນຄຸ້ມຄອງການສົ່ງເສີມການລົງທຶນລະຫວ່າງຂະແໜງການສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມລະອຽດ ຈະແຈ້ງຕື່ມ; ສະເໜີໃຫ້ມີກົນໄກການພິຈາລະນາອະນຸມັດການລົງທຶນ ໃຫ້ໄປຕາມກຳນົດເວລາຂອງກົດໝາຍ ແລະ ມີທິດທາງຫັນເປັນດີຈິຕອນໃນການຄຸ້ມຄອງ ແລະ ສ້າງຄວາມສະດວກໃຫ້ແກ່ການລົງທຶນ ທັງຕອບສະໜອງຂໍ້ມູນທີ່ຈຳເປັນໃຫ້ແກ່ນັກລົງທຶນ, ເອົາໃຈໃສ່ກວດກາ ແລະ ຄຸ້ມຄອງບັນດາໂຄງການສຳຫລວດ, ຂຸດຄົ້ນແຮ່ທາດໃຫ້ຖືກຕ້ອງຕາມກົດໝາຍ, ເດັດດ່ຽວແກ້ໄຂໂຄງການທີ່ບໍ່ມີປະສິດທິພາບທີ່ລະເມີດກົດໝາຍ ແລະ ສັນຍາ; ເພີ່ມທະວີການຄຸ້ມຄອງຊັບສິນຂອງລັດໃຫ້ຮັດກຸມ, ຈະແຈ້ງ ແລະ ຄົບຖ້ວນ.

4). ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບທິດທາງການປະຕິຮູບລັດວິສາຫະກິດ ລວມທັງການປັບປຸງໂຄງສ້າງຂອງທະນາຄານທຸລະກິດລັດ ເຊິ່ງກອງປະຊຸມເຫັນວ່າລັດຖະບານໄດ້ມີຄວາມພະຍາມຍາມປັບປຸງການເຄື່ອນໄຫວຂອງລັດວິສາຫະກິດ ໃຫ້ມີປະສິດທິຜົນ, ບໍ່ສ້າງໜີ້ສິນເພີ່ມແກ່ລັດຖະບານ. ກອງປະຊຸມໄດ້ສະເໜີໃຫ້ລັດຖະບານ ມີການຄົ້ນຄວ້າກຳນົດກົນໄກ, ຂັ້ນຕອນ ການພິຈາລະນາຕີກລົງຢ່າງລະອຽດ, ເລິກເຊິ່ງ ເພື່ອຮັບປະກັນຜົນປະໂຫຍດ ລວມຂອງປະເທດຊາດ ກໍຄືປະຊາຊົນລາວບັນດາເຜົ່າ.

5). ກອງປະຊຸມໄດ້ພິຈາລະນາ ແລະຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດ ຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດ ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19 ເຊິ່ງກອງປະຊຸມ ເຫັນໄດ້ຄວາມຈຳເປັນ ແລະ ຄວາມສຳຄັນຂອງການສົ່ງເສີມການທ່ອງທ່ຽວສີຂຽວຂອງປະເທດເຮົາ ເພື່ອແນໃສ່ກະຕຸກຊຸກຍູ້ການຜະລິດ, ການຄ້າ ແລະ ການບໍລິການ ຂອງຂະແໜງການປິ່ນອອ້ມ ໃຫ້ສາມາດດຶງດູດນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ, ສາມາດສ້າງລາຍຮັບເງິນຕາຕ່າງປະເທດ ເຂົ້າສູ່ງົບປະມານ, ປະກອບສ່ວນຕອບສະໜອງເງິນຕາໃຫ້ແກ່ປະເທດ. ກອງປະຊຸມ ໄດ້ສະເໜີໃຫ້ລັດຖະບານ ມີມາດຕະການແກ້ໄຂໃນການພັດທະນາໂຄງລ່າງພື້ນຖານ, ການໂຄສະນາ, ການຄຸ້ມຄອງ ແລະ ສ້າງຄວາມເຂັ້ມແຂງບຸກຄະລາກອນ, ການເອື້ອອຳນວຍການທ່ອງທ່ຽວ ເພື່ອໃຫ້ການທ່ອງທ່ຽວສີຂຽວສາມາດ ປະກອບສ່ວນສ້າງຄວາມເຂັ້ມແຂງໃຫ້ແກ່ເສດຖະກິດຂອງຊາດ.

6). ກອງປະຊຸມໄດ້ພິຈາລະນາ ແລະຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດສຶກສາທິການ ແລະ ກິລາ ໂດຍສະເພາະການ ປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຂັ້ນທຸກສາຍ ໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍະກຳ ເຊິ່ງກອງປະຊຸມໄດ້ຕີລາຄາສູງຕໍ່ ຄວາມພະຍາຍາມ ຂອງຂະແໜງການທີ່ກ່ຽວຂ້ອງ ທີ່ໄດ້ສຸມສະຕິປັນຍາເຂົ້າໃນ ການຈັດຕັ້ງປະຕິບັດບັນດາຄາດໝາຍຂົງເຂດສຶກສາທິການ-ກິລາ ໂດຍສະເພາະ ຟື້ນຟູການຮຽນ-ການສອນທຸກຂັ້ນ-ທຸກສາຍຫລັງຈາກການແຜ່ລະບາດຂອງ ພະຍາດໂຄວິດ-19 ດ້ວຍລະບົບທາງໄກ (On line) ໃຫ້ສາມາດກັບຄືນເຂົ້າມາ ສູ່ການຮຽນໃນຫ້ອງຮຽນ ໃນສະພາບປົກກະຕິ ແລະ ເອົາໃຈໃສ່ປັບປຸງຄຸນນະ ພາບລະບົບການຮຽນ-ການສອນໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິ ລາ-ກາຍະກຳ ຮັບປະກັນເງື່ອນໄຂໃຫ້ນັກກິລາໄດ້ເຂົ້າຮ່ວມການແຂ່ງຂັນກິລາ ໃນລະດັບຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ. ກອງປະຊຸມສະເໜີໃຫ້ລັດຖະບານສືບຕໍ່ຊີ້ນຳການຈັດຕັ້ງປະຕິບັດ 8 ຄາດໝາຍທີ່ບໍ່ທັນບັນລຸ ເປັນຕົ້ນອັດຕາ ປະລະການຮຽນ, ຄຸນນະພາບຂອງຄູສອນ, ການສົ່ງເສີມລູກຫລານເຂົ້າຮຽນຂອງຜູ້ປົກຄອງ, ເອົາໃຈໃສ່ຍົກສູງຄຸນນະພາບການສຶກສາໃນເຂດຊົນນະບົດຫ່າງໄກສອກຫລີກ ໃຫ້ໄດ້ຕາມມາດຕະຖານການສຶກສາແຫ່ງຊາດ; ພ້ອມກັນນັ້ນ, ກໍຕ້ອງເພີ່ມທະວີໃນການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານກິລາ-ກາຍຍະກຳໃນທຸກດ້ານ ໂດຍຕິດພັນກັບຫລັກສູດການຮຽນ-ການສອນໃນບັນດາສະຖາບັນການສຶກສາ, ຍູ້ແຮງຂະບວນການກິລາມະຫາຊົນ, ກິລາອາຊີບປະເພດຕ່າງໆ ທັງປັບປຸງການຈັດຕັ້ງສະມາຄົມ, ສະຫະພັນໃຫ້ມີຄຸນນະພາບ ເພື່ອຕອບສະໜອງກັບຄວາມຕ້ອງການກັບການພັດທະນາໃນຂົງເຂດດັ່ງກ່າວໃຫ້ມີການຫັນປ່ຽນດີຂຶ້ນ.

7). ກອງປະຊຸມໄດ້ຟັງການລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຕາມມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021 ແລະ ການຕິດຕາມກວດກາການນຳໃຊ້ 7 ມາດຕະການສະກັດກັ້ນຂອງອົງການສືບສວນ-ສອບສວນ ຕາມທີ່ກຳນົດໄວ້ໃນມາດຕາ 136 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໂດຍສະເພາະ ການແກ້ໄຂການລະເມີດກົດໝາຍ ໃນການພາຕົວ, ກັກຕົວ, ຈັບຕົວ ແລະ ການກັກຂັງພາງ ທີ່ບໍ່ຖືກຕ້ອງຕາມກົດໝາຍ. ກອງປະຊຸມເຫັນດີຕໍ່ເນື້ອໃນຂອງບົດລາຍງານ ຂອງອົງການໄອຍະການປະ ຊາຊົນສູງສຸດ ແລະ ສະແດງຄວາມຊົມເຊີຍຕໍ່ອົງການໄອຍະການປະຊາຊົນສູງສຸດ ທີ່ໄດ້ມີຄວາມພະຍາຍາມຈັດຕັ້ງປະຕິບັດວາລະແຫ່ງຊາດ ເປັນແຜນງານ, ໂຄງການລະອຽດຂອງຕົນ ແລະ ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດ ໂດຍສົມທົບກັບກະຊວງປ້ອງກັນຄວາມສະຫງົບຢ່າງແໜ້ນແຟ້ນກົມກຽວ; ເອົາໃຈໃສ່ການຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານດັ່ງກ່າວໃຫ້ລະອຽດຕື່ມ; ເພີ່ມທະວີການຕິດຕາມກວດກາສະຖານທີ່ກັກຂັງ, ສະຖານທີ່ບຳບັດ-ປິ່ນປົວ, ການຝຶກສີມືແຮງງານ ໃຫ້ແກ່ຜູ້ຢູ່ໃນສະຖານທີ່ກັກຂັງ, ເພີ່ມທະວີການປະສານສົມທົບ ລະຫວ່າງອົງການໄອຍະການປະຊາຊົນ ກັບອົງການສືບສວນ, ສອບສວນ ໃນການດຳເນີນຄະດີໃຫ້ມີຄວາມເປັນເອກະພາບ ແລະ ສອດຄ່ອງຕາມກົດໝາຍ.

8). ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການເຄື່ອນໄຫວວຽກງານ ໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາ ກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບຜົນການຕິດຕາມກວດກາວາລະແຫ່ງຊາດ ໃນໄລຍະຜ່ານມາ ແລະ ແຜນການຕິດຕາມກວດກາ ຂອງສະພາແຫ່ງຊາດ ກ່ຽວກັບການປະຕິບັດວາລະແຫ່ງຊາດໃນຕໍ່ໜ້າ. ກອງປະຊຸມເຫັນວ່າຕະຫລອດໄລຍະ 6 ເດືອນທີ່ຜ່ານມາ, ສະພາແຫ່ງຊາດ ຊຸດທີ IX ໄດ້ມີຄວາມເປັນເຈົ້າການ, ຫ້າວຫັນ ໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ເຮັດໃຫ້ບົດບາດຂອງສະພາແຫ່ງຊາດ ໄດ້ຮັບການເຊີດຊູນັບມື້ສູງຂຶ້ນ, ໄດ້ຮັບຄວາມເຊື່ອໝັ້ນຈາກອົງການຈັດຕັ້ງລັດຂັ້ນຕ່າງໆນັບມື້ກວ້າງຂວາງ ແລະ ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກປະຊາຊົນຜູ້ມີສິດເລືອກຕັ້ງ. ກອງປະຊຸມສະເໜີໃຫ້ເອົາໃຈໃສ່ປັບປຸງກົນໄກ, ວິທີການທາບທາມຮ່າງກົດໝາຍ, ການປະເມີນການປະຕິບັດກົດໝາຍ ໃຫ້ສອດຄ່ອງຕາມຄວາມຮຽກຮ້ອງໃນແຕ່ລະໄລຍະ ແລະ ທັນເວລາຂຶ້ນຕື່ມ ແລະ ສະເໜີໃຫ້ເອົາໃຈໃສ່ປະຕິບັດກົນໄກການຕິດຕາມກວດກາຢ່າງມີຈຸດສຸມ, ມີລັກສະນະລວມສູນ, ຮ່ວມກັບລັດຖະບານແກ້ໄຂບັນຫາຕ່າງໆຢ່າງທັນການ.

9). ກອງປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງເອົາກົດໝາຍໃໝ່ ແລະ ປັບປຸງທັງໝົດ 9 ສະບັບ; ໃນນັ້ນ, ກົດໝາຍສ້າງໃໝ່ 3 ສະບັບ ຄື: ກົດໝາຍວ່າດ້ວຍວິຈິດສິນ; ກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ; ກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ແລະ ກົດໝາຍປັບປຸງ 6 ສະບັບ ຄື: ກົດໝາຍວ່າດ້ວຍຊັບສິນຂອງລັດ; ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ; ກົດໝາຍວ່າດ້ວຍການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ; ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ; ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ເຊິ່ງເປັນການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍໄລຍະ 5 ປີຂອງສະພາແຫ່ງຊາດ ຊຸດທີ IX ທັງເປັນການປະກອບສ່ວນສຳຄັນ ໃນການປັບປຸງ ແລະ ເພີ່ມທະວີພາຫະນະ, ເຄື່ອງມືຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຂອງປະເທດເຮົາ ໃຫ້ເປັນລະບົບຄົບຊຸດ ເພື່ອຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຊາດ, ຂອງລັດ, ລວມໝູ່, ນິຕິບຸກຄົນ ແລະ ປະຊາຊົນລາວບັນດາເຜົ່າ, ຮັບປະກັນໃຫ້ແກ່ສ້າງລັດ ປະຊາທິປະໄຕປະຊາຊົນ ຂອງພວກເຮົາ ໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍ ຂອງປະຊາຊົນໂດຍປະຊາຊົນ ແລະ ເພື່ອປະຊາຊົນ ເທື່ອລະກ້າວ.

10). ກອງປະຊຸມຍັງໄດ້ຮັບຟັງການລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຍົກຍ້າຍ, ແຕ່ງຕັ້ງຮອງປະທານກຳມາທິການຈຳນວນໜຶ່ງຂອງສະພາແຫ່ງຊາດ ແລະ ການເລືອກຕັ້ງແທນສະມາຊິກສະພາແຫ່ງຊາດທີ່ວ່າງລົງ. ກອງປະຊຸມໄດ້ຄົ້ນຄວ້າພິຈາລະນາ ແລະ ເລືອກຕັ້ງເອົາທ່ານ ວຽງທະວິສອນ ເທບພະຈັນ ເປັນປະທານອົງການກວດສອບແຫ່ງລັດຄົນໃໝ່ ຕາມຄຳສະເໜີຂອງທ່ານປະທານປະເທດ; ພິຈາລະນາຮັບຮອງເອົາການແຕ່ງຕັ້ງຮອງນາຍົກລັດຖະມົນຕີຄື: ທ່ານ ພົນເອກ ວິໄລ ຫລ້າຄຳຟອງ ເປັນຮອງນາຍົກລັດຖະມົນຕີ ທັງເປັນລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ, ທ່ານ ສະເຫລີມໄຊ ກົມມະສິດ ເປັນຮອງນາຍົກລັດຖະມົນຕີ ທັງເປັນລັດຖະມົນຕີກະຊວງການຕ່າງປະເທດ; ຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງ ທ່ານ ປອ. ຄຳແພງ ໄຊສົມແພງ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ໄປຮັບໜ້າທີ່ໃໝ່ເປັນລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປລາວ ໄປຮັບໜ້າທີ່ໃໝ່ເປັນລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ແຕ່ງຕັ້ງທ່ານ ມະໄລທອງ ກົມມະສິດ ເປັນລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, ຍົກຍ້າຍ ແລະ ແຕ່ງຕັ້ງ ທ່ານ ປອ. ບຸນເຫລືອ ສິນໄຊວໍຣະວົງ ຮອງລັດຖະມົນຕີກະຊວງການເງິນ ໄປຮັບໜ້າທີ່ໃໝ່ເປັນຜູ້ວ່າການທະນາຄານແຫ່ງ ສປປລາວ ຕາມຄຳສະເໜີຂອງທ່ານນາຍົກລັດຖະມົນຕີ.

ກອງປະຊຸມໄດ້ຮັບຟັງການຊີ້ແຈງ ຕໍ່ຄຳຊັກຖາມທີ່ສະມາຊິກສະພາແຫ່ງຊາດ ກໍຄືປະຊາຊົນບັນດາເຜົ່າ ທີ່ມີຄວາມສົນໃຈຫລາຍ ຈາກທ່ານນາຍົກລັດຖະມົນຕີ, ບັນດາຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ລັດຖະມົນຕີກະຊວງການເງິນ, ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ລັດຖະມົນຕີກະ ຊວງພະລັງງານ ແລະ ບໍ່ແຮ່, ລັດຖະມົນຕີກະຊວງພາຍໃນ, ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ, ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ລັດຖະມົນຕີກະຊວງຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ, ລັດຖະມົນຕີກະຊວງຍຸຕິທຳ, ຮອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການ ສັງຄົມ, ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, ຮອງລັດຖະມົນຕີກະຊວງສາທາລະນະສຸກ, ຮອງລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ, ຜູ້ວ່າການທະນາຄານແຫ່ງ ສປປລາວ, ຫົວໜ້າອົງ ການໄອຍະການປະຊາຊົນສູງສຸດ. ກອງປະຊຸມມີຄວາມເຊື່ອໝັ້ນວ່າ ແຕ່ລະພາກສ່ວນຈະສືບຕໍ່ເສີມຂະຫຍາຍຜົນສຳເລັດທີ່ຍາດມາໄດ້ໃນປີຜ່ານມາ, ສູ້ຊົນຈຳກັດ ແລະ ປັບປຸງແກ້ໄຂບັນດາອຸປະສັກ, ສິ່ງກີດຂວາງ ໃນຂົງເຂດວຽກງານທີ່ຕົນຮັບຜິດຊອບ ຕິດພັນກັບການຍູ້ແຮງຂະບວນການແຂ່ງຂັນຮັກຊາດພັດທະນາ ເພື່ອສ້າງໃຫ້ມີການຫັນປ່ຽນທີ່ດີຂຶ້ນຢ່າງຈະແຈ້ງ, ສືບຕໍ່ຕັ້ງໜ້າຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ໂດຍສະເພາະຢ່າງຍິ່ງ 2 ວາລະແຫ່ງຊາດ ໃຫ້ເປັນຮູບປະທຳ ແລະ ມີໝາກຜົນຕົວຈິງຫລາຍຂຶ້ນ.

ພ້ອມກັນນັ້ນ, ປະທານສະພາແຫ່ງຊາດ ໃນນາມປະທານຄະນະສະຫະພັນລັດຖະສະພາສາກົນ (IPU) ຂອງສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ກ່າວຄຳເຫັນສະແດງຄວາມຊົມເຊີຍ ແລະ ອວຍພອນວັນສ້າງຕັ້ງລັດຖະສະພາສາກົນທີ່ມີອາຍຸຄົບຮອບ 133 ປີ ໃນວັນທີ 30 ມິຖຸນາ 2022 ຜ່ານມາ.

ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້ ເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກເຂົ້າສູ່ຊີວິດຕົວຈິງ, ແມ່ນໝາກຜົນແຫ່ງສະຕິປັນຍາ, ການຍົກສູງຄວາມ

ອ່ານຕໍ່ໜ້າ 6...

## ສພຂ ວຽງຈັນ ປະຊຸມຮ່ວມກັບ ພະແນກການເງິນແຂວງ



(ສພຊ) ໃນຕອນເຊົ້າ ຂອງວັນທີ 14 ມິຖຸນາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນ ແຂວງ (ສພຂ) ວຽງຈັນ ໄດ້ເປີດ ກອງປະຊຸມກະກຽມເນື້ອໃນທີ່ຈະ ນຳເຂົ້າພິຈາລະນາ, ຮັບຮອງໃນ ກອງປະຊຸມສະໄໝສາມັນເທື່ອທີ 3 ສພຂ ວຽງຈັນ ຊຸດທີ II ໂດຍ ການເປັນປະທານຂອງທ່ານ ນາງ ຈັນທະຄອນ ສີອຳພອນ ຮອງປະ ທານ ສພຂ ວຽງຈັນ; ມີບັນດາ ຄະນະກຳມະການ ແລະ ຄະນະເລ ຂາທິການ ສພຂ ເຂົ້າຮ່ວມຈຳ ນວນໜຶ່ງ.

ກອງປະຊຸມຄັ້ງນີ້ ເພື່ອ ແນະນຳໃຫ້ບັນດາພະແນກການ, ອົງການທີ່ກ່ຽວຂ້ອງໄດ້ກະກຽມ ບັນດາເນື້ອໃນທີ່ຈະນຳເຂົ້າພິຈາ ລະນາຮັບຮອງໃນກອງປະຊຸມສະ ໄໝສາມັນເທື່ອທີ 3 ຂອງ ສພຂ ວຽງຈັນ ຊຸດທີ II ພ້ອມທັງປຶກ ສາຫາລືແລກປ່ຽນ ປະກອບຄຳ ຄິດ, ຄຳເຫັນເພື່ອເອກະພາບດ້ານ ເນື້ອໃນລະອຽດ ຄື: ພິຈາລະນາ, ຮັບຮອງເອົາບົດລາຍງານຂອງເຈົ້າ ແຂວງ ກ່ຽວກັບການຈັດຕັ້ງປະ ຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງ ລັດຂັ້ນແຂວງ 6 ເດືອນຕົ້ນປີ ແລະ ແຜນພັດທະນາເສດຖະກິດ-ສັງຄົມ,ແຜນງົບປະມານແຫ່ງ ລັດຂັ້ນແຂວງ 6 ເດືອນທ້າຍປີ 2022; ຮັບຟັງການລາຍງານການ ຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ 6 ເດືອນຕົ້ນ ປີ 2022 ແລະ ແຜນພັດທະນາ ເສດຖະກິດ 6 ເດືອນທ້າຍປີ 2022 ຂອງພະແນກແຜນການ ແລະ ການລົງທຶນ; ຮັບຟັງການ ລາຍງານການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດຂັ້ນ ແຂວງ 6 ເດືອນຕົ້ນປີ ແລະ ແຜນ ງົບປະມານແຫ່ງລັດຂັ້ນແຂວງ 6 ເດືອນທ້າຍປີ 2022 ຂອງພະ ແນກການເງິນແຂວງ; ຮັບຟັງ ການລາຍງານການເຄື່ອນໄຫວ ບັນຫາພົ້ນເດັ່ນຂອງອົງການໄອ ຍະການສານປະຊາຊົນແຂວງວຽງ ຈັນ 6 ເດືອນຕົ້ນປີ ແລະ ທິດທາງ ແຜນການ 6 ເດືອນທ້າຍປີ 2022; ບົດລາຍງານການເຄື່ອນ ໄຫວບັນຫາພົ້ນເດັ່ນຂອງສານປະ ຊາຊົນແຂວງວຽງຈັນ 6 ເດືອນ ຕົ້ນປີ 2022 ແລະ ທິດທາງແຜນ ການ 6 ເດືອນທ້າຍປີ 2022; ພິຈາລະນາ, ຮັບຮອງບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ທິດທາງ ແຜນການ 6 ເດືອນທ້າຍປີ 2022 ຂອງ ສພຂ ວຽງຈັນ ຊຸດທີ II; ຮັບຟັງການລາຍງານການຈັດຕັ້ງ ປະຕິບັດ 2 ວາລະແຫ່ງຊາດ ຢູ່ ແຂວງວຽງຈັນຄື: ການແກ້ໄຂ ຄວາມຫຍຸ້ງຍາກທາງດ້ານເສດ ຖະກິດ-ການເງິນ ແລະ ການແກ້ ໄຂບັນຫາຢາເສບຕິດ ແຕ່ປີ 2021-2023; ຮັບຟັງການລາຍ ງານການຄຸ້ມຄອງສິນຄ້າຍຸດທະ ສາດ (ນ້ຳມັນເຊື້ອໄຟ ແລະ ອາ ຫານການກິນ); ພິຈາລະນາ, ຮັບ ຮອງເອົາບັນຫາສຳຄັນພື້ນຖານ ຂອງແຂວງ ແລະ ວຽກງານອື່ນ ທີ່ສຳຄັນ (ຖ້າມີ).

(ນັກຂ່າວ ສພຂ ວຽງຈັນ)

## ສພຂ ອຸດົມໄຊ ປະຊຸມຮ່ວມກັບອົງການປົກຄອງແຂວງ ແລະ ແບ່ງຄວາມຮັບຜິດຊອບພາຍໃນອະນຸກຳມະການ




(ສພຊ) ຕອນເຊົ້າວັນສຸກ ທີ 24 ມິຖຸນາ 2022 ທີ່ຫ້ອງປະ ຊຸມຫ້ອງວ່າການແຂວງອຸດົມໄຊ ໄດ້ຈັດກອງປະຊຸມຮ່ວມລະຫວ່າງ ສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ກັບອົງການປົກຄອງ ແຂວງ ໂດຍການເປັນປະທານ ຮ່ວມຂອງທ່ານ ຄຳເຜີຍ ງອນວັນ ຄຳ ຮອງປະທານ ສພຂ ແລະ ທ່ານ ສົມຈິດ ປັນຍາສັກ ຮອງ ເຈົ້າແຂວງໆອຸດົມໄຊ; ມີບັນດາ ທ່ານຄະນະປະຈຳພັກແຂວງ, ກຳ ມະການພັກແຂວງ, ຄະນະປະຈຳ ສະພາປະຊາຊົນແຂວງ, ຄະນະເລ ຂາທິການ, ຫົວໜ້າ-ຮອງຫົວໜ້າ ພະແນກ ແລະ ພະນັກງານວິຊາ ການຂະແໜງກ່ຽວຂ້ອງເຂົ້າຮ່ວມ ຢ່າງພ້ອມພຽງ.

ທັງນີ້, ກໍເພື່ອປຶກສາຫາ ລືດ້ານເນື້ອໃນທີ່ຈະນຳເຂົ້າຜ່ານ ໃນກອງປະຊຸມສະໄໝສາມັນເທື່ອ ທີ 3 ຂອງ ສພຂ ອຸດົມໄຊ ຊຸດ ທີ II ເຊິ່ງກອງປະຊຸມໄດ້ຮັບຟັງ ການຜ່ານຂໍ້ຕົກລົງຮ່ວມສະບັບ ເລກທີ 70/ອຊ, ລົງວັນທີ 4 ກຸມ ພາ 2022 ວ່າດ້ວຍການພົວພັນ ລະຫວ່າງ ສພຂ ກັບອົງການປົກ ຄອງແຂວງ ສະເໜີໂດຍທ່ານນາງ ອຳໄພວອນ ປັນຍາລັກ ຫົວໜ້າ ຫ້ອງວ່າການແຂວງ ແລະ ໄດ້ຮັບ ຟັງການຜ່ານແຜນການກະກຽມ ແລະ ດຳເນີນກອງປະຊຸມກອງປະ ຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ສະເໜີໂດຍທ່ານ ນາງ ວັນສີ ພວງມະໄລ ເລຂາທິ ການ ສພຂ. ຈາກນັ້ນ, ປະທານ ກອງປະຊຸມໄດ້ມີຄຳເຫັນຊີ້ນຳຕໍ່ ແຜນການກະກຽມ, ດຳເນີນກອງ ປະຊຸມດັ່ງກ່າວ ແລະ ບັນດາທ່ານ ຜູ້ແທນເຂົ້າຮ່ວມກອງປະຊຸມໄດ້ ພັດປ່ຽນກັນປະກອບຄຳຄິດຄຳ ເຫັນ ແລະ ມີຄຳສະເໜີແລກປ່ຽນ ກ່ຽວກັບບັນດາເນື້ອໃນທີ່ຈະນຳ ເຂົ້າຜ່ານກອງປະຊຸມດັ່ງກ່າວ ດ້ວຍຄວາມຮັບຜິດຊອບສູງ, ເລິກເຊິ່ງ ແລະ ກົງໄປກົງມາ.

ໂອກາດດຽວກັນນີ້, ບັນ ດາທ່ານໃນຄະນະປະຈຳສະພາປະ ຊາຊົນແຂວງ ກໍໄດ້ມີບາງຄຳເຫັນ ເຈາະຈີ້ມ, ແລກປ່ຽນກັບບັນດາ ພະແນກການ ເພື່ອເຮັດໃຫ້ເນື້ອ ໃນທີ່ຈະເຂົ້າຜ່ານໃນກອງປະຊຸມ ຮັບປະກັນຄວາມຖືກຕ້ອງສອດ ຄ່ອງກັບສະພາບຄວາມເປັນຈິງ ໃນແຕ່ລະໄລຍະ ແລະ ເພື່ອເຮັດ ໃຫ້ຂອດການປະສານງານ, ການ ສະໜອງຂໍ້ມູນຕ່າງໆ ລະຫວ່າງ ສພຂ ກັບ ອົງການປົກຄອງແຂວງ ໃຫ້ມີຄວາມວ່ອງໄວ, ຈະແຈ້ງ ແລະ ສຳເລັດຕາມແຜນການທີ່ ວາງໄວ້ ພ້ອມທັງສິ່ງເນື້ອໃນເອ ກະສານຕ່າງໆໃຫ້ທາງຄະນະປະ ຈຳສະພາປະຊາຊົນແຂວງ ຄົ້ນ ຄວ້າ, ພິຈາລະນາ ແລະ ນຳເຂົ້າ ຜ່ານໃນກອງປະຊຸມສະໄໝສາ ມັນເທື່ອທີ 3 ຂອງ ສພຂ ຊຸດທີ II ຕາມແຜນຄາດຄະເນແມ່ນຈະ ດຳເນີນໃນລະຫວ່າງວັນທີ 11-12 ສິງຫາ 2022.

ຫລາຍວັນຕໍ່ມາ, ໃນ ວັນທີ 27 ມິຖຸນາ ທີ່ຫ້ອງປະຊຸມ ສພຂ ໄດ້ເປີດກອງປະຊຸມອະນຸ ກຳມະການພິທີການ ແລະ ໂຄສະ ນາ-ຂ່າວສານ ໂດຍການເປັນປະ ທານຂອງທ່ານ ຄຳເຜີຍ ງອນວັນ ຄຳ ຮອງປະທານ ສພຂ ທັງເປັນ ຫົວໜ້າອະນຸກຳມະການພິທີການ ແລະ ໂຄສະນາ-ຂ່າວສານ; ມີຮອງ ປະທານຄະນະກຳມະການ, ຄະ ນະເລຂາທິການ, ຫົວໜ້າ-ຮອງ ຫົວໜ້າຂະແໜງ ແລະ ວິຊາການ ພາຍໃນອະນຸກຳມະການພິທີການ ແລະ ໂຄສະນາ-ຂ່າວສານເຂົ້າຮ່ວມ.

ຄະນະຮັບຜິດຊອບໄດ້ ຜ່ານຮ່າງຂໍ້ຕົກລົງວ່າດ້ວຍການ ແບ່ງຄວາມຮັບຜິດຊອບ ໃນອະ ນຸກຳມະການພິທີການ ແລະ ໂຄ ສະນາ-ຂ່າວສານ ເພື່ອກະກຽມ ແລະ ຊ່ວຍວຽກກອງປະຊຸມສະ ໄໝສາມັນເທື່ອທີ 3 ຂອງ ສພຂ ອຸດົມໄຊ ຊຸດທີ II; ຈາກນັ້ນ, ປະທານກອງປະຊຸມໄດ້ມີທິດຊີ້ ນຳ ແລະ ຜູ້ເຂົ້າຮ່ວມໄດ້ປະກອບ ຄຳຄິດຄຳເຫັນ, ມີຄຳສະເໜີຕໍ່ ກອງປະຊຸມຢ່າງກົງໄປກົງມາ ແລະ ຖອດຖອນບົດຮຽນໃນການ ກະກຽມກອງປະຊຸມຄັ້ງຜ່ານມາ ເຫັນວ່າມີຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແນວໃດ ແລະ ຄວນມີວິທີທາງ ແກ້ໄຂຄືແນວໃດ ເປັນຕົ້ນແມ່ນ ການເຊີນເປົ້າໝາຍເຂົ້າຮ່ວມ, ການປະດັບປະດາ, ປ້າຍພິທີ, ການໂຄສະນາ, ການຊ່ວຍວຽກ ໃນວັນປະຊຸມ ແລະ ວຽກງານປິ່ນ ອ້ອມດ້ານອື່ນໆ ເພື່ອເຮັດໃຫ້ການ ກະກຽມດຳເນີນກອງປະຊຸມໃຫ້ ສຳເລັດຕາມລະດັບຄາດໝາຍ ແລະ ທັນຕາມກຳນົດເວລາ.

ຕອນທ້າຍ, ປະທານ ກອງປະຊຸມໄດ້ເນັ້ນໜັກໃຫ້ພະ ນັກງານ-ລັດຖະກອນ ທີ່ຢູ່ໃນອະ ນຸກຳມະການທີ່ຖືກແຕ່ງຕັ້ງໃຫ້ ເອົາໃຈໃສ່ໃນການປະສານສົມ ທົບກັບບັນດາອະນຸກຳມະການ ພາຍໃນ, ພະແນກການທີ່ກ່ຽວ ຂ້ອງໃຫ້ລະອຽດຄົບຖ້ວນ, ຂໍທິດ ຊີ້ນຳຈາກຫົວໜ້າອະນຸກຳມະການ ຢ່າງເປັນປົກກະຕິ ແລະ ປະຕິບັດ ໜ້າທີ່ຕົນຕາມການໝອບໝາຍ ໃຫ້ສຳເລັດ.

(ແສງພອນ ອິນນະລົງ)

## ກຽມຄວາມພ້ອມດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງ ສພຂ ໄຊຍະບູລີ




(ສພຊ) ໃນຕອນເຊົ້າ ຂອງວັນທີ 22 ມິຖຸນາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນ ແຂວງ (ສພຂ) ໄຊຍະບູລີ ໄດ້ ຈັດກອງປະຊຸມກະກຽມຄວາມ ພ້ອມໃຫ້ແກ່ກອງປະຊຸມສະໄໝ ສາມັນເທື່ອທີ 3 ໂດຍການເປັນ ປະທານຂອງທ່ານ ນາງ ວິລະພອນ ທອງພິມ ຮອງປະທານ ສພຂ; ເຂົ້າຮ່ວມມີບັນດາປະທານ, ຮອງ ປະທານຄະນະກຳມະການ, ຮອງ ເລຂາທິການ, ຫົວໜ້າ-ຮອງຫົວ ໜ້າຂະແໜງການ ແລະ ພະນັກ ງານວິຊາການພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງ ການຜ່ານຂໍ້ຕົກລົງແຕ່ງຕັ້ງຄະນະ ຮັບຜິດຊອບກອງປະຊຸມສະໄໝ ສາມັນເທື່ອທີ 3 ຂອງ ສພຂ ໄຊຍະບູລີ ຊຸດທີ II ສະເໜີໂດຍ ທ່ານ ຄອນປະສິດ ສຸນາເຄນ ຮອງ ເລຂາທິການ ສພຂ; ຈາກນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນ ຊີ້ນຳ ແລະ ເຈາະຈີ້ມ ເພື່ອເປັນ ບ່ອນອີງໃນການຄົ້ນຄວ້າປະ ກອບຄຳຄິດຄຳເຫັນ ແນໃສ່ຂໍ້ຕົກ ລົງສະບັບດັ່ງກ່າວ ຈັດຕັ້ງປະຕິບັດ ໃຫ້ສອດຄ່ອງກັບສະພາບຕົວຈິງ ພ້ອມທັງສາມາດຈັດຕັ້ງປະຕິບັດ ໃຫ້ສຳເລັດຕາມລະດັບຄາດໝາຍ ທີ່ວາງໄວ້.

(ອິນທີ ຂຽວສີຟ້າ)

## ຮອງປະທານ ສພຂ ຈຳປາສັກ ເຄື່ອນໄຫວວຽກງານຢູ່ 2 ເມືອງ



(ສພຊ) ເມື່ອກາງມິຖຸ ນາຜ່ານມາ, ຄະນະກຳມະການ ວັດທະນະທຳ-ສັງຄົມ ແລະ ບັນ ດາເຜົ່າ (ຄວສຜ) ສະພາປະຊາ ຊົນແຂວງ (ສພຂ) ຈຳປາສັກ ໄດ້ເຄື່ອນໄຫວຕິດຕາມກວດກາ, ຊຸກຍູ້ ການຈັດຕັ້ງປະຕິບັດກົດ ໝາຍ, ນິຕິກຳໃຕ້ກົດໝາຍ ແລະ ຄາດໝາຍສູ້ຊົນໃນຂົງເຂດວັດ ທະນະທຳ-ສັງຄົມ ແລະ ບັນດາ ເຜົ່າ ຢູ່ເມືອງປະທຸມພອນ ແລະ ເມືອງໂຂງ ແຂວງຈຳປາສັກ ເຊິ່ງ ນຳໂດຍທ່ານ ສົມສີ ມະນີນິນ ຮອງປະທານ ສພຂ ຈຳປາສັກ ແລະ ທ່ານ ບຸນຮອນ ໄຊຍະວົງ ຮອງປະທານ ຄວສຜ ພ້ອມ ດ້ວຍຄະນະ.

ໃນການເຄື່ອນໄຫວ, ໄດ້ເຮັດວຽກຮ່ວມກັບອົງການ ປົກຄອງເມືອງປະທຸມພອນ ທີ່ ຫ້ອງປະຊຸມຂອງຫ້ອງວ່າການປົກ ຄອງເມືອງ ໂດຍການຕ້ອນຮັບ ຂອງທ່ານ ບຸນຖອງ ສຸພາວົງ ຮອງ ເຈົ້າເມືອງໆປະທຸມພອນ; ມີສະ ມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ ປະທຸມພອນ, ຫົວໜ້າຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ, ຫົວ ໜ້າຫ້ອງການພາຍໃນເມືອງ ພ້ອມດ້ວຍພະນັກງານວິຊາການ ທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມ ພຽງ. ສຳລັບການເຮັດວຽກຮ່ວມ ກັບອົງການປົກຄອງເມືອງໂຂງ ເພື່ອຕິດຕາມກວດກາ, ຊຸກຍູ້ ຄວາມພ້ອມໃນການຈັດຕັ້ງປະຕິ ບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດ ຕິດພັນ ກັບການປ້ອງກັນ ແລະ ຮັບມື ການແຜ່ລະບາດຂອງພະຍາດໂຄ ວິດ-19 ໂດຍການຕ້ອນຮັບຂອງ ທ່ານ ປອ. ສິດທິພອນ ບຸດຕິວົງ ຮອງເລຂາພັກເມືອງ, ສສຂ ປະ ຈຳເຂດເລືອກຕັ້ງເມືອງໂຂງ, ທ່ານ ຄຳສິງ ບຸນຈະເລີນ ຮອງເຈົ້າ ເມືອງໆໂຂງ ພ້ອມດ້ວຍບັນດາ ຫົວໜ້າຫ້ອງການ ແລະ ພະນັກ ງານວິຊາການທີ່ກ່ຽວຂ້ອງໃຫ້ ການຕ້ອນຮັບດ້ວຍຄວາມອົບອຸ່ນ.

ໃນໂອກາດນີ້, ໄດ້ຮັບ ຟັງການລາຍງານກ່ຽວກັບການ ຄຸ້ມຄອງພົນລະເມືອງ ທີ່ຍົກຍ້າຍ

ອ່ານຕໍ່ໜ້າ 5

## ສພຂ ສະຫວັນນະເຂດ ປະຊຸມຮ່ວມກັບ ບັນດາພະແນກການກະກຽມເນື້ອໃນຕ່າງໆ



(ສພຊ) ເພື່ອເຮັດໃຫ້ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ຊຸດທີ II ທີ່ຈະຈັດຂຶ້ນໃນມໍ່ໆນີ້ ດຳເນີນໄປຖືກຕ້ອງຕາມວາລະ, ມີເນື້ອໃນຄົບຖ້ວນ; ຕອນບ່າຍວັນທີ 16 ມິຖຸນາ 2022 ອົງການປົກຄອງແຂວງສະຫວັນນະເຂດ ຮ່ວມກັບ ສພຂ ແລະ ບັນດາພະແນກການຕ່າງໆອ້ອມຂ້າງແຂວງ ໄດ້ຈັດກອງປະຊຸມເພື່ອປຶກສາຫາລື ແລະ ກະກຽມເນື້ອໃນຕ່າງໆທີ່ຈະລາຍງານຕໍ່ກອງປະຊຸມດັ່ງກ່າວ ໂດຍການເປັນປະທານຂອງທ່ານ ສັນຕິພາບ ພົມວິຫານ ເຈົ້າແຂວງໆສະຫວັນນະເຂດ, ມີທ່ານກຳມະການປະຈຳພັກແຂວງ, ຮອງປະທານ ສພຂ, ຫົວໜ້າ, ຄະນະພະແນກການ-ກົມກອງອ້ອມຂ້າງແຂວງເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ເພື່ອແນະນຳໃຫ້ບັນດາພະແນກການ, ອົງການທີ່ກ່ຽວຂ້ອງໄດ້ກະກຽມບັນດາເນື້ອໃນທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ສະຫວັນນະເຂດ ຊຸດທີ II ພ້ອມທັງປຶກສາຫາລືແລກປ່ຽນປະກອບຄຳຄິດ, ຄຳເຫັນເພື່ອເອກະພາບດ້ານເນື້ອໃນລະອຽດ ຄື:

**ວຽກງານຂອງອົງການປົກຄອງແຂວງ:** ພິຈາລະນາ, ຮັບຮອງເອົາການລາຍງານໂດຍສັງເຂບຂອງເຈົ້າແຂວງ ກ່ຽວກັບສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022; ຮັບຟັງການລາຍງານຈາກຫົວໜ້າພະແນກການຕ່າງໆ ຄື: ພະແນກແຜນການ ແລະ ການລົງທຶນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022; ພະແນກການເງິນແຂວງ ກ່ຽວກັບ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022; ຮັບຟັງຮັບການລາຍງານຈາກທ່ານຮອງເຈົ້າແຂວງໆສະຫວັນນະເຂດ ກ່ຽວກັບຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ກ່ຽວກັບຄວາມຄືບໜ້າການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ; ຮັບຟັງການລາຍງານຈາກຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ແຂວງ ກ່ຽວກັບການຄຸ້ມຄອງການຂຸດຄົ້ນແຮ່ທາດພາຍໃນແຂວງສະຫວັນນະເຂດ; ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ກ່ຽວກັບການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ ໂດຍສະເພາະຂໍ້ຕົກລົງຂອງທ່ານເຈົ້າແຂວງໆສະຫວັນນະເຂດ ວ່າດ້ວຍການກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງທົ່ວແຂວງສະຫວັນນະເຂດ ແລະ ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຮັບຮອງເອົາແຜນຈັດສັນທີ່ດິນເບື້ອງຕົ້ນຂອງແຂວງສະຫວັນນະເຂດ ຮອດປີ 2025; ພະແນກສຶກສາທິການ ແລະ ກິລາແຂວງ ກ່ຽວກັບການປັບປຸງຄຸນ ນະພາບລະບົບການຮຽນ-ການສອນ ທຸກຂັ້ນທຸກສາຍໃນໄລຍະໃໝ່.

**ການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ:** ຮ່າງຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍສະກັດກັ້ນ ແລະ ຕ້ານອັກຄີໄພພາຍໃນແຂວງສະຫວັນນະເຂດ.

**ວຽກງານຂອງ ສພຂ:** ພິຈາລະນາ ແລະ ຮັບຮອງເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງ ສພຂ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາເທື່ອທີ 3 ແລະ ທິດທາງແຜນການຮອດເທື່ອທີ 4 ຂອງ ສພຂ ຊຸດທີ II.

**ວຽກງານຂອງອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ແລະ ພະແນກຍຸຕິທຳແຂວງ:** ຮັບຟັງການລາຍງານຈາກຫົວໜ້າອົງການໄອຍະການປະຊາຊົນແຂວງ ກ່ຽວກັບການປະຕິບັດພາລະບົດບາດຕິດຕາມກວດກາທົ່ວໄປ ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ; ການລາຍງານຈາກປະທານສານປະຊາຊົນແຂວງ ກ່ຽວກັບຂໍ້ສະດວກ, ຂໍ້ຫຍຸ້ງຍາກໃນການຕັດ ສິນຄະດີແພ່ງ, ຄະດີອາຍາ, ກົນໄກການປະສານສົມທົບ ໃນການດຳເນີນຄະດີຂອງສານປະຊາຊົນແຂວງ, ເຂດ ໂດຍຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ; ການລາຍງານຈາກຫົວໜ້າພະແນກຍຸຕິທຳແຂວງ ກ່ຽວກັບຂໍ້ສະດວກ, ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານທະບຽນສານ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ໃນໄລຍະຜ່ານມາ ພ້ອມທັງລາຍງານກ່ຽວກັບການຂຶ້ນບັນຊີເຕົ້າໂຮມຊັບສິນ ທີ່ສານຕັດສິນຮິບເປັນຂອງລັດໃນໄລຍະຜ່ານມາ.

(ນັກຂ່າວ ສພຂ ສະຫວັນນະເຂດ)

ອ່ານຕໍ່ຈາກໜ້າ 4

ຖິ່ນຖານພູມລຳເນົາຈາກທ້ອງຖິ່ນອື່ນ ມາດຳລົງຊີວິດ ແລະ ທຳການຜະລິດ ຢູ່ໃນເຂດເມືອງປະທຸມພອນ, ບົດລາຍງານກ່ຽວກັບການຄຸ້ມຄອງເນື້ອທີ່ປ່າສະຫງວນ, ປ່າຜະລິດ ແລະ ປ່າປ້ອງກັນໃນຂອບເຂດຂອງເມືອງປະທຸມພອນ, ການຈັດຕັ້ງ ແລະ ການເຄື່ອນໄຫວຽກງານຊົນເຜົ່າ ແລະ ສາສະໜາພາຍໃນເມືອງຈາກຮອງເຈົ້າເມືອງດັ່ງກ່າວ ແລະ ບັນດາຫົວໜ້າຫ້ອງການທີ່ກ່ຽວຂ້ອງຂອງເມືອງ.

ພ້ອມນັ້ນ, ຮອງປະທານ ສພຂ ພ້ອມດ້ວຍຄະນະ ແລະ ຄະນະນຳຂອງເມືອງປະທຸມພອນ ຍັງໄດ້ເຄື່ອນໄຫວຕິດກວດກາສະພາບຕົວຈິງ ໃນເຂດທຳການຜະລິດປູກມັນຕົ້ນຂອງປະຊາຊົນ ແລະ ລານເກັບຊື້ມັນຕົ້ນຈຳນວນໜຶ່ງ ທັງເຄື່ອນໄຫວຊຸກຍູ້, ຕິດຕາມກວດກາສະພາບການຕົວຈິງຢູ່ແຫລ່ງທ່ອງທ່ຽວນ້ຳຕົກຕາດຄອນພະເພັງ ເພື່ອເກັບກຳສະພາບບັນຫາ ແລະ ຊຸກຍູ້ການກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການປະຕິບັນແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19 ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

## ຄະນະ ສສຊ ແລະ ສພຂ ເຂດ 6 ເຄື່ອນໄຫວພົບປະຜູ້ມີເລືອກຕັ້ງ 437 ຈຸດ



ໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ທ່ານ ວົງສະຫວັນ ເທບພະຈັນ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ທັງເປັນປະທານສະພາປະຊາຊົນແຂວງ (ສພຂ) ຫລວງພະບາງ ໃນຕາມຕາງໜ້າໃຫ້ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 6 ກໍຄື ສພຂ ໄດ້ສະແດງຄວາມເຄົາລົບນັບຖືຕໍ່ການນຳພັກ-ລັດ, ພະນັກງານ, ທະຫານ, ຕຳຫລວດ, ພໍ່ແມ່ປະຊາຊົນບັນດາເຜົ່າເວົ້າລວມເວົ້າສະເພາະແມ່ນປະຊາຊົນຫລວງພະບາງ ທີ່ພວມກຳລັງຕິດຕາມການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ແລະ ສະແດງຄວາມຂອບໃຈຕໍ່ສື່ມວນຊົນ ທີ່ໃຫ້ສຳພາດຄັ້ງນີ້ ເພື່ອລາຍງານໃຫ້ສັງຄົມໄດ້ຮັບຮູ້ທາງສື່ມວນຊົນ ໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສສຊ ແລະ ສພຂ ພາຍຫລັງທີ່ສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ IX ຈົນມາເຖິງປັດຈຸບັນ.

ທ່ານໃຫ້ຮູ້ວ່າ: ພາຍຫລັງທີ່ສຳເລັດກອງປະຊຸມຄັ້ງປະຖົມມະລຶກແລ້ວ ຄະນະ ສສຊ ໄດ້ສົມທົບກັບຄະນະປະຈຳ ສພຂ ພ້ອມກັນວາງແຜນວຽກຂອງຕົນຕາມຂອບເຂດພາລະບົດບາດ, ສິດ ແລະ ໜ້າທີ່ ໃນການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານແຕ່ລະດ້ານ ເປັນຕົ້ນແມ່ນ:

**ດ້ານນິຕິບັນຍັດ ກໍຄືນິຕິກຳໃຕ້ກົດໝາຍ:** ໄດ້ສ້າງນິຕິກຳພາຍໃນ ສພຂ ໄດ້ 10 ສະບັບຄື: ມະຕິວ່າດ້ວຍການເຄື່ອນໄຫວຂອງຄະນະປະຈຳ ສພຂ, ມະຕິວ່າດ້ວຍການຈັດຕັ້ງເຄື່ອນໄຫວຂອງຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ຄະນະເລຂາທິການ ສພຂ, ຄຳແນະນຳ ການຈໍລະຈອນ ແລະ ຄົ້ນຄວ້າເອກະສານ, ຂໍ້ຕົກລົງຮ່ວມລະຫວ່າງ ສພຂ ກັບອົງການປົກຄອງແຂວງ, ຄະນະປະຈຳ ສພຂ ກັບຄະນະປະຈຳແນວລາວສ້າງຊາດ, ຄະນະເລຂາທິການ ສພຂ ກັບຫ້ອງວ່າການແຂວງ, ບົດບັນທຶກການປະສານງານລະຫວ່າງຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ແລະ ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ກັບພະແນກການ, ອົງການທຽບເທົ່າ; ຊຸກຍູ້ໃຫ້ອົງການປົກຄອງແຂວງສ້າງນິຕິກຳໃຕ້ກົດໝາຍ ເພື່ອເປັນບ່ອນອີງໃນການເຄື່ອນໄຫວວຽກງານ ແລະ ນຳເຂົ້າພິຈາລະນາ, ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ລວມທັງໝົດ 5 ສະບັບຄື: ຂໍ້ຕົກລົງວ່າດ້ວຍການກຳນົດຄິດໄລ່ຄ່າຫົວໜ່ວຍການທົດແທນຄ່າເສຍຫາຍໃຫ້ແກ່ປະຊາຊົນ ທີ່ໄດ້ຮັດຜົນກະທົບຈາກໂຄງການກໍ່ສ້າງທີ່ມີຄວາມສ່ຽງໄພພິບັດນ້ຳຖ້ວມຢູ່ເຂດເທສະບານນະຄອນຫລວງພະບາງ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການປູກຫຍ້າ-ລ້ຽງສັດຢູ່ແຂວງຫລວງພະບາງ, ຂໍ້ຕົກລົງວ່າດ້ວຍການສ້າງເຂດ ແລະ ກຳນົດລາຄາປະເທີນທີ່ດິນ 8 ເມືອງຂອງແຂວງຫລວງພະບາງ, ຂໍ້ຕົກລົງວ່າດ້ວຍການຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງຫລວງພະບາງ ແລະ ຂໍ້ຕົກລົງວ່າດ້ວຍການກຳນົດຫົວໜ່ວຍທົດແທນຜົນເສຍຫາຍໃຫ້ແກ່ປະຊາຊົນ ທີ່ໄດ້ຮັດຜົນກະທົບຈາກໂຄງການຂຸດຄົ້ນຫີນອ່ອນມາໂບ (Marble) ຢູ່ເຂດບ້ານແດນສະຫວ່າງ, ນະຄອນຫລວງພະບາງ, ແຂວງຫລວງພະບາງ; ພ້ອມນີ້, ບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທີ 6, ສສຂ ຍັງໄດ້ປະກອບຄຳເຫັນທາບທາມຮ່າງກົດໝາຍສ້າງໃໝ່ ແລະ ປັບປຸງຢູ່ຂັ້ນແຂວງ ຈຳນວນ 21 ສະບັບ.

**ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງຊາດ ກໍຄືຂອງແຂວງ:** ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 6, ສພຂ ກໍໄດ້ພ້ອມກັນຍົກສູງຄວາມຮັບຜິດຊອບໜ້າທີ່ທາງການເມືອງ, ຖືເປັນອັນສຳຄັນໃນການເຂົ້າຮ່ວມແຕ່ຫົວທີ ເພື່ອຄົ້ນຄວ້າ, ວິໄຈບັນຫາຕາມຂອບເຂດສິດ ແລະ ໜ້າທີ່ຄວາມຮັບຜິດຊອບເຊັ່ນ: ສສຊ ຈຳນວນ 10 ທ່ານ ໄດ້ເຂົ້າຮ່ວມຄົ້ນຄວ້າ, ພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງຊາດ ເຊິ່ງໄດ້ອອກເປັນມະຕິ ຈຳນວນ 33 ມະຕິ, ເຂົ້າຮ່ວມກອງປະຊຸມທາງໄກ ຕາມການເຊີນຂອງຄະນະປະຈຳສະພາແຫ່ງຊາດ ແລະ ບັນດາກຳມາທິການສະພາແຫ່ງຊາດ ລວມທັງໝົດ 27 ຄັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ຄະນະປະຈຳ ສພຂ ໄດ້ຄົ້ນຄວ້າ, ພິຈາລະນາ, ຮັບຮອງເອົາບັນຫາສຳຄັນຂອງແຂວງ ເຊິ່ງໄດ້ອອກເປັນມະຕິ ຈຳນວນ 32 ມະຕິ ລວມທັງການຄົ້ນຄວ້າ, ພິຈາລະນາຮັບຮອງເອົາການສະເໜີແຕ່ງຕັ້ງ, ຍົກຍ້າຍບຸກຄະລາກອນຂອງແຂວງ.

**ດ້ານການຕິດຕາມກວດກາ:** ຖືເປັນວຽກງານໃຈກາງຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 6 ກໍຄື ສພຂ ເຊິ່ງໃນນີ້ ໄດ້ສ້າງແຜນການຕິດຕາມກວດກາປະຈຳ 6 ເດືອນ, ປະຈຳປີຂອງຄະນະ ສສຊ ກໍຄື ສພຂ, ຜ່ານມາໄດ້ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມ ສພຂ ສຳເລັດ 11 ເມືອງ, 1 ນະຄອນ ແລະ ພະແນກການຈຳນວນໜຶ່ງ, ນອກນີ້ຍັງໄດ້ລົງຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕິດພັນກັບການຜັນຂະຫຍາຍ 2 ວາລະແຫ່ງຊາດ ຢູ່ບັນດາເມືອງ-ນະຄອນ ແລະ ໄດ້ຕິດຕາມກວດກາການແກ້ໄຂຄຳຮ້ອງທຸກຂອງປະຊາຊົນໃຫ້ມີຄວາມຖືກຕ້ອງ, ວ່ອງໄວ ແລະ ສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍ ເຊິ່ງໄດ້ມີຄຳຮ້ອງທຸກຂອງປະຊາຊົນ ມາຍື່ນທີ່ ສພຂ ຈຳນວນ 82 ເລື່ອງ, ຄະນະ ສສຊ ແລະ ສພຂ ໄດ້ເອົາໃຈໃສ່ຄົ້ນຄວ້າແກ້ໄຂສຳເລັດແລ້ວ ຈຳນວນ 79 ເລື່ອງ, ປັດຈຸບັນພວມກຳລັງຄົ້ນຄວ້າແກ້ໄຂຢູ່ ຈຳນວນ 3 ເລື່ອງ.

ທ່ານ ວົງສະຫວັນ ເທບພະຈັນ ກ່າວວ່າ: ໃນຖານະເປັນຕົວແທນຂອງປະຊາຊົນ ຄະນະ ສສຊ ແລະ ສພຂ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ນຳເອົາຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ແລະ ກອງປະຊຸມສະໄໝສາມັນເທື່ອທີ 2 ໄປໂຄສະນາເຜີຍແຜ່ໃຫ້ຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ ທັງໝົດ 437 ຈຸດ, ມີຜູ້ມີສິດເລືອກຕັ້ງເຂົ້າຮ່ວມຮັບຟັງທັງໝົດ 39.493 ເທື່ອຄົນ ຍິງ 18.034 ເທື່ອຄົນ, ໃນນີ້ ບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທີ 6, ສສຂ ຍັງໄດ້ຂົນຂວາຍ, ປຸກລະດົມທຶນຮອນ, ວັດຖຸປັດໃຈ ໄປຊຸກຍູ້ຊ່ວຍເຫລືອປະຊາຊົນ, ອົງການປົກຄອງທ້ອງຖິ່ນ, ກົມກອງ, ບ້ານ ລວມມູນຄ່າ 300 ກວ່າລ້ານກີບ.

ນອກຈາກນີ້, ຄະນະ ສສຊ ແລະ ສພຂ ຍັງໄດ້ໃຫ້ຄວາມສຳຄັນຫລາຍ ໃນການຈັດຕັ້ງໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເຊິ່ງໄດ້ລົງເຄື່ອນໄຫວໂຄສະນາເຜີຍແຜ່ບັນດາກົດໝາຍ ແລະ ນິຕິກຳຈຳນວນໜຶ່ງ ໃນຂົງເຂດສະພາ ຢູ່ບັນດາເມືອງ, ນະຄອນ ແລະ ພະແນກການ, ອົງການທຽບເທົ່າ, ເຂົ້າຮ່ວມໃນການການປະເມີນການຈັດຕັ້ງປະຕິບັດກົດໝາຍ ທີ່ພົວພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ.

ສຳລັບໃນຕໍ່ໜ້ານີ້, ທ່ານໃຫ້ຮູ້ວ່າ: ຄະນະ ສສຊ ແລະ ສພຂ ຍັງຕ້ອງຍົກສູງຄວາມເປັນເຈົ້າການໃນການຄົ້ນຄວ້າ, ວິໄຈບັນຫາ ເພື່ອຮັບປະກັນການຄົ້ນຄວ້າບັນຫາສຳຄັນ ທີ່ຈະນຳເຂົ້າມາພິຈາລະນາ, ຮັບຮອງໃນກອງປະຊຸມສະໄໝສາມັນ ຂອງ ສພຊ ແລະ ສພຂ, ເອົາໃຈໃສ່ການປະກອບຄຳເຫັນໃສ່ການທາບທາມຮ່າງກົດໝາຍ, ເປັນເຈົ້າການຕິດຕາມ, ກວດກາສະພາບບັນຫາໃນເຂດເລືອກຕັ້ງ, ສ້າງແຜນການເຄື່ອນໄຫວຕິດຕາມ, ກວດກາຢ່າງມີຈຸດສຸມ, ເບິ່ງໃຫ້ເຫັນບັນຫາພົ້ນເດັ່ນທີ່ເກີດຂຶ້ນ ເຊິ່ງນຳຜົນກະທົບ ແລະ ເສຍຫາຍມາສູ່ປະຊາຊົນ, ຮັບປະກັນການເຮັດວຽກປົກປ້ອງສິດຜົນປະໂຫຍດຂອງປະຊາຊົນໃຫ້ສູງ, ດັ່ງນີ້ ກໍເພື່ອຮັບປະກັນການປະຕິບັດ 3 ພາລະບົດບາດ ໃຫ້ມີປະສິດທິຜົນ, ພາຍຫລັງສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລ້ວ, ຄະນະສະມາຊິກສະພາແຫ່ງຊາດ ແລະ ສພຂ ຕ້ອງສຸມໃສ່ບັນດາໜ້າວຽກຢ່າງມີຈຸດສຸມ ຄື: ຊຸກຍູ້ໃຫ້ອົງການປົກຄອງທ້ອງຖິ່ນ ສ້າງນິຕິກຳໃຕ້ກົດໝາຍ ໃຫ້ຫລາຍຂຶ້ນກວ່າເກົ່າ ແລະ ການສ້າງນິຕິກຳພາຍໃນ ສພຂ ໃຫ້ໄດ້ຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ກົດໝາຍໄດ້ກຳນົດໄວ້; ເອົາໃຈໃສ່ກຽມບັນດາເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ເຊິ່ງຄາດຄະເນວ່າຈະເປີດຂຶ້ນໃນເດືອນກໍລະກົດ 2022 ບົນພື້ນຖານເນື້ອໃນຂອງກອງປະຊຸມຈະມີການຄົ້ນຄວ້າ, ພິຈາລະນາ, ຮັບຮອງເອົານິຕິກຳໃຕ້ກົດໝາຍ 2 ສະບັບ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ 6 ເດືອນຕົ້ນປີ, ການຈັດຕັ້ງປະຕິບັດວຽກງານຂອງອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ແລະ ວຽກງານຂອງ ສພຂ, ນອກນີ້, ຍັງຈະໄດ້ມີການພິຈາລະນາ, ຮັບຮອງເອົາບຸກຄະລາກອນຂອງແຂວງ ຈຳນວນໜຶ່ງຕາມການສະເໜີຂອງອົງການປົກຄອງແຂວງ; ສືບຕໍ່ຊຸກຍູ້ການລົງເຄື່ອນໄຫວຕິດຕາມ, ກວດກາວຽກງານຕາມແຜນຂອງຄະນະ ສສຊ ແລະ ສພຂ ຕາມຈຸດສຸມວຽກ ແລະ ເປົ້າໝາຍທີ່ວາງໄວ້, ເອົາໃຈໃສ່ຄົ້ນຄວ້າແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນໃຫ້ວ່ອງໄວ ແລະ ຖືກຕ້ອງກັບກົດໝາຍ, ຕິດຕາມການແກ້ໄຂປະກົດການຫຍໍ້ທໍ້ຂອງສັງຄົມ ແລະ ລົງຕິດຕາມກວດກາ, ເກັບກຳຂໍ້ມູນຂອງທາງສຽງຂອງສັງຄົມ ໃຫ້ທັນເວລາ ແລະ ຍຸຕິທຳ, ພ້ອມກັນນັ້ນ ກໍນຳເອົາຜົນສຳເລັດຂອງກອງປະຊຸມສະພາແຫ່ງຊາດ ແລະ ສພຂ ລົງເຜີຍແຜ່ໃຫ້ຜູ້ມີສິດເລືອກຕັ້ງ ໄດ້ຮັບຮູ້ ແລະ ເຂົ້າໃຈ ຢ່າງທົ່ວເຖິງກັນ.

ໂອກາດດຽວກັນນີ້, ທ່ານ ວົງສະຫວັນ ເທບພະຈັນ ໄດ້ກ່າວຄຳອວຍພອນໄຊອັນປະເສີດແດ່ການນຳພັກ-ລັດ, ພະນັກງານ, ທະຫານ, ຕຳຫລວດ, ພໍ່ແມ່ປະຊາຊົນບັນດາເຜົ່າ ໃນທົ່ວປະເທດ ຂໍໃຫ້ມີສຸຂະພາບແຂງແຮງ, ຮັ່ງມີເຂັ້ມແຂງ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານທຸກປະການ.



## ສຸກສະບາຍຫາຍໂຣຄາ

# ຄຸນປະໂຫຍດ 7 ຢ່າງຂອງກາເຟດຳທີ່ຄົນຮັກສຸຂະພາບຕ້ອງຮູ້!

**ແປ ແລະ ຮຽບຮຽງໂດຍ: ສົມນຶກ ແກ້ວໄຊຍະຈັກ**



ເມື່ອເວົ້າເຖິງກາເຟ ຫລາຍຄົນຄົງຈະຄິດເຖິງເຊັ່ນ: Cappuccino, ລາເຕ້ ຫລື ກາເຟ ທີ່ສາມາດຈົກຊອງຊົງກິນໄດ້ທັນທີ ເຊິ່ງຈະມີລົດຊາດແລ້ວທີ່ຫວານ ແລະ ແຊບ ໂດຍລືມວ່າມີກາເຟອີກປະເພດໜຶ່ງ ທີ່ມີລົດຊາດແຊບ ແລະ ທ່ານຄວນຈະຕ້ອງລອງ ນັ້ນແມ່ນກາເຟດຳ ເພາະກາເຟດຳ ມີລົດຊາດທີ່ຂົມ ຈຶ່ງເຮັດໃຫ້ຫລາຍຄົນເບິ່ງຂ້າມ; ແຕ່ທ່ານຮູ້ບໍ່ວ່າ ກາເຟດຳທີ່ຂົມນັ້ນ ມີປະໂຫຍດຫລາຍກວ່າທີ່ທ່ານຄິດ ສະນັ້ນ ມື້ນີ້ມາອ່ານນຳກັນເລີຍວ່າກາເຟດຳມີຄຸນປະໂຫຍດແນວໃດ:

1. ການປ້ອງກັນເຊື້ອໄວຣັສຕັບອັກເສບ C

ໄວຣັສຕັບອັກເສບ C ເປັນພະຍາດທີ່ອັນຕະລາຍຫລາຍ ແຕ່ມີການວິໄຈພົບວ່າ ການດື່ມກາເຟດຳເປັນປະຈຳໃນແຕ່ລະມື້ນັ້ນ ຈະສາມາດຫລຸດຜ່ອນ ແລະ ປ້ອງກັນພະຍາດຕັບອັກເສບ C ໂດຍການດື່ມກາເຟຢ່າງໜ້ອຍ 3 ຈອກຕໍ່ມື້, ແຕ່ກໍຕ້ອງເບິ່ງໃນດ້ານອື່ນຂອງສຸຂະພາບຮ່າງກາຍຕົນເອງ ເພາະວ່າບາງຄົນອາດຈະມີພະຍາດປະຈຳຕົວທີ່ບໍ່ສາມາດດື່ມກາເຟ ຫລື ຄາເຟອີນໄດ້.

2. ຊ່ວຍຫລຸດນ້ຳໜັກ

ຫລາຍຄົນອາດຈະເຂົ້າໃຈວ່າດື່ມກາເຟ ແມ່ນສາເຫດຂອງໂລກອ້ວນ ແຕ່ຄວາມຈິງແມ່ນກົງກັນຂ້າມ ເພາະວ່າກາເຟດຳມີສ່ວນຊ່ວຍໃນການລະລາຍໄຂມັນໄດ້ດີ ແລະ ສາມາດໃຫ້ພະລັງງານທົດແທນໄດ້ ເຊິ່ງການດື່ມກາເຟເປັນປະຈຳຫລັງອາຫານ ຖືວ່າເປັນວິທີທີ່ດີທີ່ສຸດ ເພາະວ່າກາເຟ ຈະເຮັດໃຫ້ໄຂມັນທີ່ທ່ານກິນໄດ້ສະຫລາຍໄປຢ່າງງ່າຍດາຍ ແຕ່ຕ້ອງເປັນກາເຟດຳທີ່ບໍ່ມີນ້ຳຕານ.

3. ປ້ອງກັນພະຍາດຫືດ

ກາເຟສາມາດປ້ອງກັນພະຍາດຫອບຫືດໄດ້ ຍ້ອນວ່າພະຍາດຫອບຫືດແມ່ນເກີດມາຈາກ ເສັ້ນປະສາດສຳຮອງຖືກກະຕຸ້ນ ຈຶ່ງສະແດງອາການຫອບຫືດອອກມາ ແຕ່ເມື່ອດື່ມກາເຟດຳເປັນປະຈຳ ກາເຟດຳຈະຊ່ວຍຜ່ອນຄາຍຄວາມຕຶງຄຽດຂອງຄວາມຮູ້ສຶກຂອງປະສາດສຳຮອງ ແລະ ບໍ່ກໍ່ໃຫ້ເກີດອາການຫອບຫືດ.

4. ຫລຸດຜ່ອນຄວາມສ່ຽງຂອງພະຍາດຫົວໃຈ.

ກາເຟດຳ ເມື່ອເຮົາດື່ມເລື້ອຍໆ ຈະຊ່ວຍຫລຸດຜ່ອນຄວາມສ່ຽງຂອງໂລກຫົວໃຈໄດ້ດີ ເນື່ອງຈາກກາເຟດຳມີວິຕາມິນ B ລວມຊະນິດໜຶ່ງເອີ້ນວ່າ ນິໂຄຕິນ ເຊິ່ງຈະຊ່ວຍຫລຸດໄຂມັນໃນເລືອດ ແລະ ປ້ອງກັນຫລອດເລືອດແຂງຕົວ ຈຶ່ງບໍ່ເຮັດໃຫ້ເກີດພະຍາດຫົວໃຈ ພ້ອມທັງຫລຸດຜ່ອນຄວາມສ່ຽງຂອງພາວະໄຂມັນໃນເລືອດສູງອີກດ້ວຍ ແຕ່ສຳລັບຄົນທີ່ເປັນພະຍາດຫົວໃຈຫ້າມດື່ມເດັດຂາດ.

5. ປ້ອງກັນມະເຮັງ

ມະເຮັງສາມາດປ້ອງກັນໄດ້ ໂດຍການດື່ມກາເຟດຳ ເພາະວ່າກາເຟດຳມີກົດອາຊິດກົກ ທີ່ຊ່ວຍຢຸດການຈະເລີນເຕີບໂຕຂອງກ້ອນເນື້ອຮ້າຍ ແລະ ທຳລາຍຈຸລັງທີ່ຜິດປົກກະຕິທີ່ອາດຈະກາຍເປັນມະເຮັງໃນຕໍ່ໜ້າ ແຕ່ກາເຟດຳສາມາດປ້ອງກັນມະເຮັງໃນໄລຍະເລີ່ມຕົ້ນເທົ່ານັ້ນ ບໍ່ສາມາດໃຊ້ໃນການຮັກສາພະຍາດມະເຮັງ.

6. ບັນເທົາອາການເຈັບຫົວ

ຖ້າມັກມີອາການເຈັບຫົວ ການດື່ມກາເຟດຳ ກໍສາມາດຊ່ວຍໄດ້ເຊັ່ນກັນ ເພາະຄາເຟອີນ ຊ່ວຍໃນການຂະຫຍາຍເສັ້ນເລືອດ ເຮັດໃຫ້ການໄຫລວຽນຂອງເລືອດດີຂຶ້ນ ແລະ ລະງັບອາການເຈັບຫົວໄດ້ ນອກຈາກນັ້ນຍັງສາມາດຊ່ວຍບັນເທົາອາການເຈັບຫົວເນື່ອງຈາກການເມົາຄ້າງໄດ້ອີກດ້ວຍ ແຕ່ບໍ່ຄວນດື່ມຫລາຍເກີນໄປ ເພາະວ່າມັນອາດຈະສົ່ງຜົນກະທົບດ້ານລົບ.

7. ຊ່ວຍຫລຸດອາການເຖົ້າໄວ

ສຳລັບຜູ້ທີ່ບໍ່ຕ້ອງການທີ່ຈະເຖົ້າໄວ ພຽງແຕ່ດື່ມກາເຟດຳເລື້ອຍໆ ຈະຊ່ວຍໃຫ້ນານເຖົ້າ ເພາະວ່າກາເຟດຳຈະຫລຸດຜ່ອນການສະສົມຂອງອົກຊີແຊນທີ່ຫລາຍເກີນໄປ ເຊິ່ງອາດຈະເຮັດໃຫ້ເຖົ້າໄວ ແລະ ເຮັດໃຫ້ຜິວເຄັ່ງຕຶງ, ກະຊັບ ປ້ອງກັນບໍ່ໃຫ້ເກີດຮອຍຫ່ຽວ ແລະ ຮອຍຫ່ຽວເທິງຜິວໜັງ.

ແລ້ວພວກເຮົາຈະເລືອກດື່ມກາເຟດຳຍີ່ຫໍ້ໃດດີ?

ໃນຕະຫລາດປັດຈຸບັນມີກາເຟດຳໃຫ້ເລືອກຈາກຫລາຍຍີ່ຫໍ້ ທີ່ເໝາະສົມກັບຄວາມຕ້ອງການ ເຊັ່ນ: ການຊື້ເມັດກາເຟແລ້ວນຳມາບົດເອງ ເພື່ອເອົາມາໃຊ້ກັບເຄື່ອງຊົງກາເຟ ຫລື ເປັນກາເຟແບບສຳເລັດຮູບ ທີ່ຂົ້ວບົດມາແລ້ວ ມີແຕ່ໃສ່ນ້ຳຮ້ອນແລ້ວສາມາດດື່ມໄດ້ເລີຍ. ຄືກັບທີ່ທ່ານຮູ້ແລ້ວວ່າ ກາເຟດຳ ມີຄຸນປະໂຫຍດ ແຕ່ເຖິງຢ່າງໃດກໍຕາມ, ກາເຟ ຍັງມີຂໍ້ເສຍຢູ່ ເປັນຕົ້ນແມ່ນເຮັດໃຫ້ນອນບໍ່ຫລັບ, ຖ່າຍເບົາເລື້ອຍໆ, ສົ່ງຜົນກະທົບທາງລົບຕໍ່ລູກໃນທ້ອງ. ການອັກເສບໃນກະເພາະອາຫານ ແລະ ອື່ນໆອີກຫລາຍ; ສະນັ້ນ, ຄວນດື່ມກາເຟຢ່າງເໝາະສົມ ແລະ ເພີ່ມນ້ຳຕານ ຫລື ນົມໃຫ້ໜ້ອຍທີ່ສຸດ ເພື່ອປ້ອງກັນພະຍາດເບົາຫວານ.

**ຂໍ້ມູນຈາກ:** https://www.coffee-favour.com/black-coffee/

## ສາລາກະວີ

# ຕາມຮອຍລຸງ

**(ແດ່ວັນຄ້າຍວັນເກີດປະທານ ສຸພານຸວົງ 13 ກໍລະກົດ)**

**# ໂດຍ: ບໍ່ຮູ້ຊື່**

| | |
|---|---|
| ❊ ທຽມນີ້ແສນຊາບຊຶ້ງ | ຝັງເລິກດວງຣິໄທ |
| ພູມໃຈໃນຜົນງານ | ທ່ານປະທານພຽນສ້າງ |
| ແປງປທາງເດີນໄວ້ | ເປັນທວນໄຟເຍືອງສ່ອງ |
| ຊີ່ສຽງດັ່ງກຽດກ້ອງ | |
| ເບື້ອງຫລັງກອງທັບສ້າງ | ວາງໄວ້ແບບແຜນ |
| ❊ ແມ່ນວຽກໜັກບໍ່ຍ້ານ | ຖວາຍມອບຊີວິ |
| ພຣິຊິບນຳພາລາວ | ຕ່ອຍຕີມານຮ້າຍ |
| ລຸງໄດ້ທຳລາຍມ້າງ | ການຄອງເມືອງສະໄໝເກົ່າ |
| ຍາດເອົາເອກະລາດໄວ້ | ປະຊາໄດ້ໂຮ່ສະຫລອງ |
| ❊ ໃຈຂອງລຸງແກ່ນກ້າ | ຫອມຮັກປະຊາຊົນ |
| ເຮົາຄົນລາວຫວງແຫນ | ເຊີດຊູດັ່ງກ້ອງ |
| ທົ່ວໂລກາຍໍຍ້ອງ | ຜົນງານຂອງທ່ານ |
| ປະທານສຸພານຸວົງຊື່ນີ້ | ລືກ້ອງຊ່າໄກ |
| ❊ ພີ່ນ້ອງລາວຈຶ່ງໄດ້ | ວິໄລຮຸ່ງເຮືອງສີ |
| ຍ້ອນວ່າຄົນລາວມີ | ທ່ານຜູ້ນຳຫານກ້າ |
| ປັນຍາດີໃສແຈ້ງ | ເປັນແວ່ນແຍງເຍືອງສ່ອງ |
| ລາວເຮືອງຮອງຮຸ່ງເຫລື້ອມ | ປະຊາແຍ້ມຊື່ນບານ |
| ❊ ປະຕິຍານຕໍ່ຕັ້ງ | ຝັງເຊື່ອຄຳສອນ |
| ຈະບໍ່ຄອນແຄນໄຫວ | ຊິໄຕ່ຕາມລຸງສ້າງ |
| ແບບຢ່າງລຸງມີໄວ້ | ນຳໄປສານຕໍ່ |
| ບໍ່ໃຫ້ເສຍຊາດເຊື້ອ | ລຸງສ້າງສືບມາ ດອກນາ! |
| ❊ ຂໍຈຳຈາລຶກໄວ້ | ເນົາແນບໃນຊວງ |
| ດຸ່ງເດີນໄປຕາມຮອຍ | ຂີດໝາຍວາງໄວ້ |
| ໜັກເອົາເບົາໃຈສູ້ | ມີເກງກົວໄຫວຫວັ່ນ |
| ເອົາບົດຮຽນທ່ານນັ້ນ | ເປັນແກ້ວແວ່ນແຍງ ແທ້ນາ! |



## ທັກທາຍ ລະບາຍ

**# ສາວຈົ້ມ**

### (ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

❊ **ເສັດ**ສິ້ນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ **ຊຸດທີ IX** ບັນຍາກາດພາຍໃນສະພາແຫ່ງຊາດ ກໍ່ງຽບເຫງົາພໍສົມຄວນ ຫລັງຈາກທີ່ຄຶກຄື້ນມາເປັນເວລາເກືອບເດືອນ ຕອນນີ້ຫລາຍໆທ່ານກໍ່ຄົງກັບເຖິງເຮືອນເຖິງຊານເປັນທີ່ຮຽບຮ້ອຍ ຈຶ່ງຂໍຖາມຂ່າວຊໍ ບັນດາທ່ານ **ສສຊ** ພ້ອມພໍ່ຄລສ **ພາກເໜືອ-ກາງ-ໃຕ້** ເປັນແນວໃດບໍ່ເຈົ້າ ວິຊາການເຮົາກໍ່າຝ່າຍ ຫລາຍອາທິດມິດງຽບ ຈາກບັກຽມຄຶກຄື້ນ ເດີນໜ້າເຄື່ອນໄຫວ **ແລ້ວບໍ່!**

❊ **ວັນ**ທີ 13 ກໍລະກົດນີ້ ແມ່ນວັນຄ້າຍວັນເກີດຂອງ**ປະທານ ສຸພານຸວົງ** ຄົບຮອບ **113 ປີ** ແລະ ໂອກາດດຽວກັນນີ້ ຍັງແມ່ນວັນອະນຸລັກສັດນ້ຳສັດປ່າຂອງລາວ ຊາວປະຊາດີໃຈ ຮ່ວມໂຮມສະຫລອງຕ້ອນ **ລະນຶກບຸນຄຸນໄວ້** ເໜືອນທອນໄຟເຍືອງສ່ອງ ຂໍເຊີນຊວນພີ່ນ້ອງ ງົດລ່າສັດທັງຢູ່ບົກ ແລະ ນ້ຳ ກະທ່າສ້າງສ່ວນກຸສົນ **ຊອນແລ້ວ!**

❊ **ວັນ**ທີ 13 ກໍລະກົດ ທີ່ຈະມາເຖິງນີ້ ເປັນວັນ**ບຸນເຂົ້າພັນ**ສາຕາມ**ຮີດ 12 ຄອງ 14** ເຊິ່ງຖືວ່າເປັນບາງບຸນໃຫຍ່ຂອງພະສົງອົງຄະເຈົ້າເພື່ອເຂົ້າສູ່ການຈຳພັນສາໃນຊ່ວງລະດູຝົນ ເຊີນທຸກຄົນຮ່ວມສ້າງ ບຸນໃຫຍ່ເປັນກຸສົນ ພາອະນາຖືສີນ ຊ່ວງພັນສານີ້ ບໍ່ເມົາມົວຫານົ້ວ ແນວບໍ່ດີຄອຍຫ່າງ ທ່າຄວາມດີສືບສ້າງ ປະດັບເອົ້ຄູ່ກາຍ **ພີ່ນ້ອງເອີຍ!**

## ຊວນຍິ້ມ

**# ແອ່ນຕຸ້ງ**

**ເລື່ອງ: ໜຶ່ງວັນປານສາມເດືອນ**

ທ້າວເອນໄປປຶກສາໝໍ

**ເອນ:** ທ່ານໝໍເອີຍ ເຮັດແນວໃດຈຶ່ງອາຍຸຍືນ ບອກຈັກໜ່ອຍແດ່

**ທ່ານໝໍ:** ບໍ່ຍາກ! ຢູ່ແຕ່ເຮືອນ ບໍ່ກິນເຫລົ້າ ບໍ່ສູບຢາ ບໍ່ມີເພດສຳພັນ

**ເອນ:** ຊິໄດ້ຜົນຢູ່ບໍ່ທ່ານໝໍ?

**ທ່ານໝໍ:** ໄດ້ຜົນແນ່ນອນຖ້າປະຕິບັດຕາມບອກ ເພາະຢູ່ມື້ໜຶ່ງສ່ຳສາມ ເດືອນພຸ້ນລະ

**ເອນ:** ເອີ! ຄືຊິແມ່ນຄວາມທ່ານໝໍວ່າ!



## ຄະຕິເຕືອນໃຈ

**# ດອກຂະຍອມ**

ຄຳປາກພໍ່ແມ່ນີ້ ໜັກເກິ່ງທໍລະນີ

ໃຜຜູ້ຢ່າເກງນົບ ຫາກຊິດີເມືອໜ້າ

ອ່ານຕໍ່ໜ້າ 3...

ຮັບຜິດຊອບການເມືອງຂອງບັນດາທ່ານສະມາຊິກສະພາແຫ່ງຊາດ, ຄວາມຕັດສິນໃຈຂອງລັດຖະບານ, ກະຊວງ, ອົງການທີ່ກ່ຽວຂ້ອງ ທີ່ຈະສືບຕໍ່ພັດທະນາປະເທດຊາດ ໃນສະພາບມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້, ນຳເອົາປະເທດຊາດກ້າວຂຶ້ນຢ່າງໜັກແໜ້ນ.

ເພື່ອສືບຕໍ່ຈັດຕັ້ງຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມຄັ້ງນີ້, ກອງປະຊຸມຮຽກຮ້ອງມາຍັງຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ, ລັດຖະບານ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງໄດ້ຜັນຂະຫຍາຍມະຕິກອງປະຊຸມຄັ້ງນີ້ ເຂົ້າໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຮັບຜົນສຳເລັດຢ່າງຈົບງາມ ກໍຍ້ອນມີການຊີ້ນຳຢ່າງໃກ້ຊິດຈາກກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ, ຍ້ອນຄວາມຮັບຜິດຊອບສູງຂອງລັດຖະບານ, ກະຊວງ, ບັນດາອົງການທີ່ກ່ຽວຂ້ອງ ແລະ ຂະແໜງການກ່ຽວຂ້ອງ.

ຕາງໜ້າຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ຂໍສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ ທີ່ຍາມໃດກໍ່ໄດ້ໃຫ້ການຊີ້ນຳຢ່າງໃກ້ຊິດຕໍ່ສະພາແຫ່ງຊາດ ໂດຍຕະຫລອດມາ, ຂໍສະແດງຄວາມຂອບໃຈ ເປັນຢ່າງຍິ່ງມາຍັງບັນດາທ່ານການນຳພັກ-ລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ແລະ ປະຊາຊົນລາວບັນດາເຜົ່າ ທີ່ໄດ້ຕິດຕາມກອງປະຊຸມຂອງພວກເຮົາໃນຄັ້ງນີ້ ຢ່າງຈົດຈໍ່ ແລະ ສົ່ງຄຳຄິດເຫັນຜ່ານໂທລະສັບສາຍດ່ວນ ມາຍັງກອງປະຊຸມຢ່າງຫລວງຫລາຍ.

ຂໍສະແດງຄວາມຂອບໃຈ ຕໍ່ທຸກພາກສ່ວນກ່ຽວຂ້ອງ ທີ່ໄດ້ປະກອບສ່ວນເຂົ້າໃນຜົນສຳເລັດຂອງກອງປະຊຸມຄັ້ງນີ້ ເປັນຕົ້ນ ກອງເລຂາກອງປະຊຸມທີ່ເຮັດວຽກຢ່າງບໍ່ຮູ້ອິດເມື່ອຍ, ທີມແພດສະເພາະກິດປ້ອງກັນພະຍາດໂຄວິດ-19 ທີ່ຮັບໃຊ້ກອງປະຊຸມສະໄໝສາມັນເທື່ອນີ້ຢ່າງຫ້າວຫັນ, ຂໍສະແດງຄວາມຂອບໃຈຕໍ່ສື່ມວນຊົນທີ່ໄດ້ນຳສະເໜີຂ່າວສານ ໂດຍການຖ່າຍທອດສົດຂ່າວຜ່ານວິທະຍຸ, ໂທລະພາບ ແລະ ສື່ເອເລັກໂຕຣນິກ ເຊິ່ງອຳນວຍຄວາມສະດວກໃນການຕິດຕາມ ການດຳເນີນກອງປະຊຸມໄດ້ທັນສະພາບການແທດຕົວຈິງ ແລະ ຕໍ່ເນື່ອງ.

ສຸດທ້າຍນີ້, ຂ້າພະເຈົ້າ ຕາງໜ້າໃຫ້ກອງປະຊຸມສະພາແຫ່ງຊາດ ຂໍອວຍພອນໄຊອັນປະເສີດມາຍັງພະ ນະທ່ານເລຂາທິການໃຫຍ່, ປະທານປະເທດ ຈົ່ງມີພາລານາໄມສົມບູນ, ມີຄວາມຜາສຸກໃນຊີວິດຄອບຄົວ, ມີຜົນສຳເລັດໃໝ່ໃຫຍ່ຫລວງກວ່າເກົ່າໃນພາລະກິດແຫ່ງການຊີ້ນຳ-ນຳພາປະເທດຊາດ ໃຫ້ຈະເລີນກ້າວຂຶ້ນຢ່າງໜັກແໜ້ນ.

ຂໍອວຍພອນໃຫ້ບັນດາທ່ານການນຳຂັ້ນສູງພັກ-ລັດ, ພະນັກງານ, ທະຫານຕຳຫລວດ ແລະ ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມສຸກໃນຄອບຄົວ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານອັນມີກຽດຂອງຕົນ.

ໃນໂອກາດອັນສະຫງ່າລາສີນີ້, ຂ້າພະເຈົ້າ ຂໍປະກາດປິດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງເປັນທາງການນັບແຕ່ເວລານີ້ເປັນຕົ້ນໄປ.

ຖະແຫລງ...

ສະເໜີ;

3. ກົດໝາຍວ່າດ້ວຍຊັບສິນຂອງລັດ ເຊິ່ງແມ່ນກະຊວງການເງິນເປັນຜູ້ສະເໜີ;

4. ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ເຊິ່ງແມ່ນກຳມາທິການຍຸຕິທຳ ສະພາແຫ່ງຊາດ ເປັນຜູ້ສະເໜີ;

5. ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ ເຊິ່ງແມ່ນສານປະຊາຊົນສູງສຸດ ເປັນຜູ້ສະເໜີ;

6. ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ເຊິ່ງແມ່ນກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ສະເໜີ. ການພິຈາລະນາ ແລະ ຮັບຮອງເອົາກົດໝາຍ ຈຳນວນ 9 ສະບັບ ດັ່ງກ່າວ ເຖິງວ່າເວລາສັ້ນ, ເນື້ອໃນຂອງກົດໝາຍແມ່ນກວ້າງຂວາງ, ເລິກເຊິ່ງ ແລະ ມີການພົວພັນກັບຫລາຍບັນຫາສຳຄັນອື່ນໆ, ໃນດ້ານອື່ນ ກອງປະຊຸມໄດ້ດຳເນີນມາເປັນເວລາຫລາຍມື້, ມີຄວາມອິດເມື່ອຍ ແລະ ຢູ່ໃນທ່າມກາງບັນຍາກາດທີ່ສະພາບການຢູ່ພາຍໃນ ແລະ ຕ່າງປະເທດ ມີຄວາມເຄັ່ງຮ້ອນເຄັ່ງຕຶງຫລາຍປະການ, ແຕ່ດ້ວຍຄວາມຮັບຜິດ ຊອບສູງຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ໃນຖານະເປັນຕົວແທນແຫ່ງສິດອຳນາດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ແລະ ດ້ວຍຄວາມເປັນເຈົ້າການຂອງຄະນະຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍ ກໍຄືພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງທຸກທ່ານ ຈຶ່ງເຮັດໃຫ້ການພິຈາລະນາ ແລະ ຮັບຮອງເອົາບັນດາກົດໝາຍເຫລົ່ານັ້ນສຳເລັດຜົນຢ່າງຈົບງາມຕາມແຜນການທີ່ໄດ້ກຳນົດໄວ້, ທັງຮັບປະກັນປະສິດທິພາບ ແລະ ປະສິດທິຜົນເປັນຢ່າງດີ.

ສິ່ງສຳຄັນແມ່ນບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ມີຄວາມຫ້າວຫັນສະໝັກໃຈລົງທະບຽນປະກອບຄວາມເຫັນ, ມີຄວາມມານະອົດທົນສູງ, ຢຶດໝັ້ນຕໍ່ສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ, ຕັ້ງໜ້າຄົ້ນຄວ້າ, ຄິດຫງໍ່າ, ວິເຄາະວິໄຈເນື້ອໃນແຕ່ລະກົດໝາຍ ຢ່າງມີເຫດຜົນ, ເລິກເຊິ່ງ, ຮອບດ້ານ, ແທດຕົວຈິງ ເຮັດໃຫ້ການລົງຄະແນນສຽງຮັບຮອງເອົາກົດໝາຍເຫລົ່ານັ້ນ ບໍ່ສະເພາະແຕ່ໄດ້ບັນລຸຕາມຄາດໝາຍທີ່ວາງໄວ້ເທົ່ານັ້ນ ແຕ່ຫາກຍັງມີຄວາມໝາຍຢ່າງເລິກເຊິ່ງ ເຖິງການເສີມຂະຫຍາຍສິດປະຊາທິປະໄຕຂອງຜູ້ແທນປະຊາຊົນອີກດ້ວຍ.

ການພິຈາລະນາ ແລະ ລົງຄະແນນສຽງຮັບຮອງເອົາກົດໝາຍ 9 ສະບັບ ແມ່ນຜົນສຳເລັດທີ່ສຳຄັນໃນການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ທີ່ກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຮັບຮອງເອົາ, ທັງເປັນການປະກອບສ່ວນສຳຄັນໃນການປັບປຸງ ແລະ ເພີ່ມທະວີພາຫະນະ, ເຄື່ອງມືຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມຂອງປະເທດເຮົາໃຫ້ເປັນລະບົບຄົບຊຸດ ເພື່ອຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຊາດ, ຂອງລັດ, ລວມໝູ່, ບຸກຄົນ, ນິຕິບຸກຄົນ ແລະ ປະຊາຊົນລາວບັນດາເຜົ່າ, ສະກັດກັ້ນ ແລະ ຕ້ານບັນດາປາກົດການຫຍໍ້ທໍ້ ທີ່ເປັນການປະພຶດລະເມີດກົດໝາຍ ຢູ່ໃນສັງຄົມ ແລະ ແນວຄິດອິດສະລະເສລີຕາມໃຈຊອບທີ່ຢູ່ເໜືອກົດໝາຍ, ພ້ອມກັນນັ້ນ, ກໍເປັນປັດໄຈຮັບປະກັນໃຫ້ແກ່ການສ້າງລັດ ປະຊາທິປະໄຕປະຊາຊົນຂອງພວກເຮົາ ໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນເທື່ອລະກ້າວ, ທັງຮັບປະກັນໃຫ້ແກ່ການເຊື່ອມຈອດ, ເຊື່ອມໂຍງເຂົ້າສູ່ພາກພື້ນ ແລະ ສາກົນຂອງປະເທດເຮົາ.

ບັນດາກົດໝາຍເຫລົ່ານັ້ນ ຍັງຈະໄດ້ສືບຕໍ່ປັບປຸງຮຽບຮຽງໃຫ້ສຳເລັດສົມບູນ ແລະ ສະເໜີຫາທ່ານປະທານປະເທດ ແຫ່ງ ສປປລາວ ພິຈາລະນາອອກລັດຖະດຳລັດ ປະກາດໃຊ້ຢ່າງເປັນທາງການ ຕາມຂັ້ນຕອນຂອງກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ການພິຈາລະນາ ແລະ ຮັບຮອງເອົາກົດໝາຍ 9 ສະບັບນີ້ ເປັນພຽງແຕ່ຜົນສຳເລັດສ່ວນໜຶ່ງໃນການປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍ ປະຈຳປີ 2022 ແລະ 5 ປີເທົ່ານັ້ນ; ໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄຂຂຶ້ນທ້າຍປີ 2022 ນີ້ ຍັງຈະສືບຕໍ່ພິຈາລະ ນາສ້າງ ແລະ ປັບປຸງກົດໝາຍ ຈຳນວນ 19 ສະບັບອີກ ແລະ ຍັງຈະສືບຕໍ່ສ້າງ ແລະ ປັບປຸງກົດໝາຍ ແຕ່ນີ້ຫາປີ 2025, ເຊິ່ງລາຍລະອຽດ ພາຍຫລັງສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 3 ນີ້ແລ້ວ ກຳມາທິການກົດໝາຍ ຈະສືບຕໍ່ສົມທົບກັບ ບັນດາກຳມາທິການຂອງສະພາແຫ່ງຊາດ ແລະ ບັນດາກະຊວງ, ອົງການ ທີ່ມີສິດສ້າງ ແລະ ປັບປຸງກົດໝາຍ ຄົ້ນຄວ້າເບິ່ງຄືນແຜນການການສ້າງ ແລະ ປັບປຸງກົດໝາຍແຕ່ນີ້ຫາປີ 2025 ແລ້ວລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາຊີ້ນຳ ໃນກໍລະນີຫາກມີຄວາມຈຳເປັນຕ້ອງປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີນັ້ນ ຈະໄດ້ລາຍງານຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ພິຈາລະນາຮັບຮອງ.

ການສ້າງ ແລະ ປະກາດໃຊ້ກົດໝາຍ ເປັນວຽກງານທີ່ສຳຄັນ ແລະ ມີຄວາມຫຍຸ້ງຍາກສັບສົນບໍ່ໜ້ອຍຢູ່ແລ້ວ, ແຕ່ບັນຫາສຳຄັນຍິ່ງກວ່ານັ້ນ ແມ່ນບັນຫານຳເອົາກົດໝາຍທີ່ໄດ້ປະກາດໃຊ້ແລ້ວ ເຂົ້າສູ່ຊີວິດຕົວຈິງຂອງສັງຄົມ ແລະ ເຮັດໃຫ້ກາຍເປັນສະຕິຕື່ນຕົວເຄົາລົບ, ແບບແຜນດຳລົງຊີວິດ, ຄວາມຊິນເຄີຍ ແລະ ການປະພຶດຕົວຈິງ ຂອງສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ກຳມະ ກອນ, ກະສິກອນ, ນັກຮຽນຮູ້ປັນຍາຊົນ, ນັກທຸລະກິດທັງພາກລັດ ແລະ ເອກະຊົນ, ພະສົງອົງຂະເຈົ້າ, ນັກບວດ ແລະ ພົນລະເມືອງລາວທຸກຄົນ ລວມທັງຜູ້ບໍ່ມີສັນຊາດ ແລະ ຊາວຕ່າງດ້າວ ທີ່ດຳລົງຊີວິດຢູ່ ສປປລາວ.

ດັ່ງນັ້ນ, ໃນໂອກາດນີ້ ຂ້າພະເຈົ້າ ຈຶ່ງສະເໜີໄປຍັງບັນດາກະຊວງ, ອົງການ ທີ່ມີກົດໝາຍໃນຄວາມຮັບຜິດຊອບຂອງຕົນ ຈົ່ງເອົາໃຈໃສ່ໂຄສະນາ, ເຜີຍແຜ່ ກົດໝາຍເຫລົ່ານີ້ ໃຫ້ພົນລະເມືອງທຸກຄົນ, ທຸກຊັ້ນຄົນ, ເຜົ່າຊົນ ແລະ ສາສະໜາ ແລະ ທຸກການຈັດຕັ້ງ ຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງ ແລະ ທົ່ວເຖິງ ເພື່ອພ້ອມກັນເປັນເຈົ້າການຕື່ນຕົວເຄົາລົບ ແລະ ປະຕິບັດຢ່າງເຂັ້ມງວດ. ພ້ອມກັນນີ້, ສະເໜີໃຫ້ທຸກກະຊວງ, ອົງການ ໃຫ້ຮີບຮ້ອນສືບຕໍ່ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍ ປະຈຳປີ 2022 ເພື່ອນຳສະເໜີຜ່ານກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ຮັບປະກັນຄຸນນະພາບ ແລະ ທັນຕາມກຳນົດເວລາ.

ໃນຕອນທ້າຍນີ້, ຂ້າພະເຈົ້າ ຂໍຮຽກຮ້ອງໄປຍັງປະຊາຊົນລາວບັນດາເຜົ່າທຸກທົ່ວໜ້າ ຈົ່ງຍົກສູງນ້ຳໃຈຮັກຊາດ, ນ້ຳໃຈເປັນເຈົ້າຂອງປະເທດຊາດ, ຍົກສູງສະຕິເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນພາຍໃນຊາດ ເພື່ອພ້ອມກັນສືບຕໍ່ປະກອບສ່ວນຢ່າງສົມກຽດ ເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງພວກເຮົາ ໃຫ້ວັດທະນະຖາວອນ, ເຮັດໃຫ້ປະຊາຊົນລາວບັນດາເຜົ່າ ຢູ່ເຢັນເປັນສຸກ.

# ກົດໝາຍວ່າດ້ວຍຍານພາຫະນະທາງບົກ

ຕໍ່ຈາກສະບັບກ່ອນ...

**ມາດຕາ 66 ທຸລະກິດສູນທົດສອບຍານພາຫະນະທາງບົກ**

ທຸລະກິດສູນທົດສອບຍານພາຫະນະທາງບົກ ແມ່ນ ການດຳເນີນທຸລະກິດກ່ຽວກັບການທົດສອບຍານ ພາຫະນະເປັນຄັນ, ຊິ້ນສ່ວນ, ວັດສະດຸ ທີ່ນຳມາຜະລິດ ແລະ ປະກອບ ເພື່ອຢັ້ງຢືນຄຸນນະພາບ, ປະສິດທິ ພາບກ່ຽວກັບຍານພາຫະນະທາງບົກ ຕາມມາດຕະຖານເຕັກນິກຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ ໂດຍສອດຄ່ອງກັບມາດຕະຖານສາກົນ ທາງດ້ານຄຸນນະພາບ, ຄວາມປອດໄພ ແລະ ສິ່ງແວດລ້ອມ.

ຂະແໜງການໂຍທາທິການ ແລະ ຂົນສົ່ງ ເປັນຜູ້ອະນຸຍາດດຳເນີນທຸລະກິດ ສູນທົດສອບຍານພາຫະນະທາງບົກ.

**ມາດຕາ 67 ທຸລະກິດສູນກວດກາເຕັກນິກຍານພາຫະນະທາງບົກ**

ທຸລະກິດສູນກວດກາເຕັກນິກຍານພາຫະນະທາງບົກ ແມ່ນ ການດຳເນີນທຸລະກິດກ່ຽວກັບການກວດກາເຕັກນິກ, ພິສູດຄວາມຖືກຕ້ອງ, ປະເມີນຄວາມປອດໄພຂອງຍານພາຫະນະ ແລະ ສິ່ງແວດລ້ອມ ໃຫ້ຖືກຕ້ອງຕາມລະບຽບການທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ.

ຂະແໜງການໂຍທາທິການ ແລະ ຂົນສົ່ງ ເປັນຜູ້ອະນຸຍາດດຳເນີນທຸລະກິດ ສູນກວດກາເຕັກນິກຍານ ພາຫະນະທາງບົກ.

**ມາດຕາ 68 ທຸລະກິດອູ່ສ້ອມແປງລົດ**

ທຸລະກິດອູ່ສ້ອມແປງລົດ ແມ່ນການດຳເນີນທຸລະກິດກ່ຽວກັບການສ້ອມແປງ, ຟື້ນຟູ ແລະ ຕົບແຕ່ງລົດ ໃຫ້ຢູ່ໃນສະພາບດີ ໃຊ້ງານໄດ້ ຖືກຕ້ອງຕາມມາດຕະຖານເຕັກນິກດ້ານ ຄຸນນະພາບ, ຄວາມປອດໄພ ແລະ ສິ່ງແວດລ້ອມ.

ຂະແໜງການໂຍທາທິການ ແລະ ຂົນສົ່ງ ເປັນຜູ້ອະນຸຍາດດຳເນີນທຸລະກິດ ອູ່ສ້ອມແປງລົດ ໂດຍປະ ສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 69 ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ ມີສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນທຸລະກິດຕາມທີ່ໄດ້ຮັບອະນຸຍາດ;
2. ໄດ້ຮັບ ຂໍ້ມູນ-ຂ່າວສານ ທີ່ຈຳເປັນໃນການດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ;
3. ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ;
4. ຮັບປະກັນທາງດ້ານຄຸນນະພາບ, ມາດຕະຖານເຕັກນິກຂອງຍານພາຫະນະທາງບົກ ຫຼື ການບໍລິ ການຂອງຕົນ;
5. ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນຈາກການບໍລິການຂອງຕົນ;
6. ປະກອບສ່ວນໃນການປົກປັກຮັກສາສິ່ງແວດລ້ອມ;
7. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດ ໃນການກວດກາການດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ;
8. ເສຍພາສີ, ສ່ວຍສາອາກອນ ແລະ ພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
9. ນຳໃຊ້ສິດແລະປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 70 ການໂຈະດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ**

ການດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ ຈະຖືກໂຈະໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການສະເໜີຂອງຜູ້ດຳເນີນທຸລະກິດ;
2. ດຳເນີນທຸລະກິດບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍທີ່ໄດ້ຮັບອະນຸຍາດ ຫຼື ການນຳເຂົ້າພາຫະນະ ບໍ່ໄດ້ມາດຕະຖານ;
3. ດຳເນີນທຸລະກິດບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບກົດໝາຍ;
4. ສ້າງຜົນເສຍຫາຍຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;
5. ບໍ່ດຳເນີນທຸລະກິດຕໍ່ເນື່ອງ ເປັນເວລາ ໜຶ່ງປີ.

ການໂຈະການດຳເນີນທຸລະກິດ ຕ້ອງກຳນົດເວລາອັນແນ່ນອນ ເພື່ອໃຫ້ເວລາໃນການແກ້ໄຂ ຫຼື ປັບປຸງ ໃຫ້ຄືນສູ່ສະພາບປົກກະຕິ.

**ມາດຕາ 71 ການຍົກເລີກການດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ**

ການດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ ຈະຖືກຍົກເລີກໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການສະເໜີ ຂອງຜູ້ດຳເນີນທຸລະກິດໂດຍມີເຫດຜົນພຽງພໍ;
2. ຜູ້ດຳເນີນທຸລະກິດ ລະເມີດກົດໝາຍ ແລະ ສ້າງຜົນເສຍຫາຍ ຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງ ແວດລ້ອມຢ່າງຮ້າຍແຮງ;
3. ບໍ່ແກ້ໄຂ ຫຼື ປັບປຸງ ຕາມກຳນົດເວລາໃນການສັ່ງໂຈະ;
4. ຖືກຖອນໃບອະນຸຍາດດຳເນີນທຸລະກິດ;

ອ່ານຕໍ່ສະບັບໜ້າ...






































**ຜູ້ຊີ້ນຳ**

ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**

ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**

ທ່ານ ປອ. ພິດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**

ທ່ານ ນາງ ກິງໃຈ ແສງອຳພັນ
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ

**ອອກແບບຈັດໜ້າ**

ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ